# ຫລັກພື້ນຖານເບື້ອງຕົ້ນຂອງການເທສນາ

## Basic Prinicples of Preachings

# ບົດທີ 1

# ບົດແນະນຳການເທສນາ

## Introduction to Preaching

*"ຈົ່ງເທສນາພຣະວັຈນະ (ພຣະຄຳ) ຈົ່ງເອົາໃຈໃສ່ເຮັດການທັງໃນເວລາທີ່ມີໂອກາດ ແລະບໍ່ມີໂອກາດ ຈົ່ງຊັກຊວນດ້ວຍເຫດຜົນ ຈົ່ງເຕືອນສະຕິ ແລະຈົ່ງໜູນໃຈດ້ວຍຄວາມພຽນອົດທົນທຸກຢ່າງໃນການສັ່ງສອນ" (2 ຕີໂມທຽວ 4:2 NIV)*

### ນຶ່ງ. ຄວາມໝາຍຂອງຄຳວ່າ "ເທສນາ" (The Meaning of Preaching)

ຄຳວ່າ **"ເທສນາ"** ໂດຍທົ່ວໄປໃນພາສາອັງກິດໃຊ້ຄຳວ່າ "Preach" ຊຶ່ງເປັນຄຳທີ່ມີຮາກສັບມາຈາກພາສາລາຕິນໝາຍເຖິງການ **"ປະກາດ"** (proclaim) ຄຳນີ້ໄດ້ນິຍົມໃຊ້ຈົນເປັນທີ່ຍອມຮັບກັນວ່າໝາຍເຖິງ ການປະກາດເທສນາສັ່ງສອນສິລທັມ ເມື່ອການເທສນາໄດ້ມີການປັບປຸງພັດທະນາການຈົນໃນທີ່ສຸດກາຍເປັນສາດ(ວິຊາ)ຂະແໜງນຶ່ງ ເອີ້ນວ່າ "Homiletics"(ເທສນາສາດ) ອັນໝາຍເຖິງ ສິລປະຂອງການຂຽນແລະການເທສນາ ຄຳວ່າ **"ເທສນາ"** ໃນພາສາລາວມີຮາກສັບຈາກພາສາສັນສະກິດມາຈາກຄຳວ່າ **"ເທສນ໌"** ໝາຍເຖິງ ຄຳສອນ ການສະແດງທັມສັ່ງສອນ ແຕ່ຊາວບ້ານໝາຍເຖິງການຮ້າຍ ຕຳໜິ ຫລືດ່າວ່າເມື່ອມີຄວາມຜິດ

ການເທສນາຖືວ່າເປັນ **"ສາດ"** (Science ຫລື ວິທະຍາສາດ) ຢ່າງນຶ່ງ ທີ່ຖືເຊັ່ນນັ້ນເພາະວ່າ ການເທສນາປະກອບດ້ວຍການສຶກສາຄົ້ນຄວ້າ ການທຳຄວາມເຂົ້າໃຈກັບພຣະວັຈນະຂອງພຣະເຈົ້າທີ່ຈະນຳໄປໃຊ້ເທສນາຢ່າງຖືກຕ້ອງ ເພື່ອໃຫ້ຜູ້ຟັງຮູ້ວ່າພຣະທັມຂໍ້ນັ້ນຫລືບົດຕອນນັ້ນສອນຫຍັງ ມີຄວາມໝາຍຫຍັງແກ່ຊີວິດຂອງເຂົາ ແລະເຂົາຈະນຳໄປປະຕິບັດແນວໃດ ການເທສນາຕ້ອງມີພຣະວັຈນະຂອງພຣະເຈົ້າເປັນສູນກາງ ເປັນແກ່ນສານຂອງຄຳເທສນາ ຫາກຂາດພຣະວັຈນະຂອງພຣະເຈົ້າກໍຈະບໍ່ເປັນຄຳເທສນາ ແຕ່ການເປັນການສະແດງສູນທອນພົດ (Speech) ນອກຈາກນັ້ນການເທສນາຍັງກ່ຽວຂ້ອງກັບການວິເຄາະການໄຈ້ແຍກ ແລະການຮຽບຮຽງຂຶ້ນໃໝ່ ເພື່ອໃຫ້ຜູ້ຟັງສາມາດເຂົ້າໃຈພຣະວັຈນະໄດ້ດີຍິ່ງຂຶ້ນ ການດຳເນີນການເຫລົ່ານີ້ເປັນສາດທີ່ຜູ້ເທສນາຈະຕ້ອງພັດທະນາ ແລະປັບປຸງຕົວໃຫ້ເຂົ້າກັບຍຸກສະໄໝຢູ່ສເມີ

ການເທສນາຍັງຖືວ່າເປັນ **"ສິລປະ"** (Art) ເພາະຕ້ອງອາສັຍຄວາມສາມາດໃນການຝຶກແອບຄວາມຊຳນານ ຄວາມສາມາດໃນການປະຍຸກ ຄືການດັດແປງໃຫ້ເໝາະສົມກັບສະຖານການທີ່ປ່ຽນແປງຢູ່ຕລອດເວລາ ຜູ້ເທສນາຕ້ອງຮູ້ຈັກພຣະວັຈນະຂອງພຣະເຈົ້າ ແລະຫລັກຄວາມເຊື່ອຢ່າງພຽງພໍ ທີ່ຈະຮູ້ຈັກການຮຽບຮຽງຂຶ້ນໃໝ່ ແລະມີການຖ່າຍທອດທີ່ໜ້າສົນໃຈ ຊັດແຈ້ງ ດຶງດູດໃຈຜູ້ຟັງ ພ້ອມທັງທ້າຊວນ

ເສີມສ້າງຄວາມເຊື່ອໃຫ້ແກ່ຜູ້ຟັງ ແລະສເນີແນະໃຫ້ຜູ້ຟັງສາມາດນຳພຣະວັຈນະໄປປະຕິບັດຕາມນ້ຳພຣະທັຍຂອງພຣະເຈົ້າທີ່ໄດ້ຊົງສຳແດງໄວ້ ຜູ້ເທສນາຈຶ່ງບໍ່ພຽງແຕ່ຕ້ອງເຂົ້າໃຈໃນພຣະວັຈນະຂອງພຣະເຈົ້າຢ່າງຖືກຕ້ອງ ແລະສາມາດເຫດຕາມຈຸດປະສົງແລະຄຳສອນທີ່ແທ້ຈິງຂອງພຣະວັຈນະເທົ່ານັ້ນ ແຕ່ຕ້ອງເປັນຄົນທີ່ມີຄວາມຄິດທີ່ເສີມສ້າງ ຮຽນຮູ້ຈັກວິທີຕ່າງ ໆ ທີ່ຈະນຳເອົາພຣະວັຈນະຂອງພຣະເຈົ້າມາເປີດເຜີຍໃຫ້ຜູ້ຟັງເກີດຄວາມເຂົ້າໃຈ ທີ່ຈະປະຕິບັດຕາມນ້ຳພຣະທັຍ ແລະພຣະປະສົງຂອງພຣະເຈົ້າຢ່າງມີຊີວິດຊີວາ ໂດຍມີຄວາມເຂົ້າໃຈງ່າຍ ແຕ່ມີພລັງແຮງຫລາຍຍິ່ງຂຶ້ນ

ດັ່ງນັ້ນຜູ້ເທສນາທີ່ປະສົບຄວາມສຳເຣັດສູງຈະຕ້ອງ ມີທັງປະສົບການ ຄວາມຊຳນານ ຄວາມຮອບຮູ້ ຈິດໃຈທີ່ຮັກການຮຽນ ຄວາມຖ່ອມຕົນທີ່ຈະຍອມຮັບຄວາມບົກພ່ອງ ຍອມແກ້ໄຂ ແລະມີຄວາມອົດທົນໃນການຝຶກຝົນຢ່າງບໍ່ຮູ້ຈັກເຫນື່ອຍ ຮູ້ຈັກສະແຫວງຫາການເຂົ້າເຝົ້າໃກ້ຊິດພຣະເຈົ້າ ເພື່ອຮັບການສຳແດງຈາກພຣະເຈົ້າ ແລະເພື່ອໃຫ້ພຣະວັຈນະຂອງພຣະເຈົ້າເປັນຄວາມຈິງທີ່ປາກົດໃຫ້ຜູ້ຟັງ

## ສອງ. ລັກສນະຂອງການເທສນາ (The Nature of Preaching)

ແມ່ນວ່າພຣະຄຣິສທັມຄັມພີ ຈະບໍ່ໄດ້ມີຄຳຈຳກັດຄວາມຂອງຄຳວ່າເທສນາໄວ້ເປັນຢ່າງທາງການວ່າການເທສນາແມ່ນຫຍັງ ແຕ່ຈາກການສຶກສາໃນຕອນຕົ້ນ ໆ ຂອງການປະກາດພຣະທັມຂ່າວປະເສີດໄດ້ເປີດເຜີຍໃຫ້ເຮົາເຂົ້າໃຈວ່າ ການເທສນາໃນພາສາກຣີກໃຊ້ຫລາຍຄວາມເວົ້າທີ່ບັນລະຍາຍເຖິງລັກສນະຂອງການເທສນາ ຄຳວ່າ "kerysseín" (ເຄຣູແຊນ) ຊຶ່ງແປວ່າ "ປະກາດ" ຫລື "ປ່າວປະກາດ" ຫລາຍ ໆ ເທື່ອ ຊຶ່ງມີຄວາມຫມາຍເຖິງການເທສນາ ຄຳນີ້ໄດ້ພົບເຖິງ 50 ເທື່ອ ໃນພຣະທັມຂ່າວປະເສີດແລະພຣະທັມກິຈການ ຄຳນີ້ມັກຈະແປວ່າ "ເທສນາ" ຫມາຍຄວາມວ່າຜູ້ສົ່ງຂ່າວມີຂ່າວສານຈາກພຣະເຈົ້າເຣື້ອງພຣະເຢຊູຄຣິສ ເພາະວ່າຜູ້ສົ່ງຂ່າວນີ້ຖືກແຕ່ງຕັ້ງຈາກພຣະເຈົ້າ ດັ່ງນັ້ນຜູ້ຟັງຈຶ່ງຈຳເປັນຕ້ອງຟັງແລະຂັບຕາມ ຄືກັບຮັບພຣະບັນຊາຈາກພຣະເຈົ້າ

ຄຳອີກຄຳນຶ່ງທີ່ສຳຄັນສຳລັບຄຳວ່າ "ເທສນາ" ຄືຄຳວ່າ "euangelizesthai" (ຢູອັງກະລິແຊສໄຕ) ຊຶ່ງແປວ່າ "ເທສນາຂ່າວດີ" ຄຳນີ້ຊີ້ເຖິງລັກສນະຂອງຂ່າວວ່າ ເປັນຂ່າວດີທີ່ກຳລັງມາຫລືຂ່າວດີທີ່ມາແລ້ວ ທີ່ມີໄວ້ໃຫ້ສຳລັບທຸກຄົນ ນອກຈາກນີ້ຍັງມີຄຳອື່ນ ໆ ອີກທີ່ໃຊ້ໃນພຣະຄັມພີພາກທັມທະສັນຍາໃຫມ່ ເຊັ່ນຄຳວ່າ "didaskein" (ດາດັນແກນ) ຫມາຍເຖິງການແຈ້ງຄວາມຈິງຂອງພຣະເຈົ້າໂດຍຜ່ານທາງການສິດສອນ ຄຳວ່າ "dialegesthai"(ດາອາເລກເກສໄຕ) ເປັນການສົນທະນາດ້ວຍເຫດຜົນໃນລັກສນະຊັກຊວນ ຄຳວ່າ "laelein" (ລາລິນ) ເປັນລັກສນະການເວົ້າຫລືສົນທະນາ ຄຳວ່າ "parakalein" (ນລຈສນລິນ) ແປລວ່າ ການກ່າວຕັກເຕືອນ

ພາຣາຄາລີນ

**ມີນັກເທດຫລາຍຄົນໄດ້ໃຫ້ຄຳຈຳກັດຄວາມລັກສະນະຄວາມຫມາຍຂອງການເທສນາ**

**ທ່ານຟິລລິບ ບຣູຄ** (Phillips Brooks) ໄດ້ໃຫ້ຄວາມຫມາຍຂອງຄຳວ່າເທສນາທີ່ຮູ້ຈັກກັນດີວ່າ "ການເທສນາເປັນການສື່ສານຄວາມຈິງຂອງພຣະເຈົ້າ ຈາກມະນຸດ (ຜູ້ເທສນາ) ເຖິງມະນຸດ (ຜູ້ຟັງຄຳເທສນາ) ຊຶ່ງມີອົງປະກອບສຳຄັນສອງຢ່າງ ຄືຄວາມຈິງ ແລະບຸກຄົນ ຖ້າຂາດສິ່ງນຶ່ງສິ່ງໃດໃນອົງປະກອບທັງສອງຈະບໍ່ເປັນການເທສນາ" [1]

**ທ່ານແອນດຣູ ດັບເບິລຢູ ແບລກວູດ** (Andrew W. Blackwood) ເປັນຜູ້ທີ່ມີຊື່ສຽງໃນບັນດານາຍຄຣູທີ່ສອນວິຊາເທສນາ ໄດ້ໃຫ້ລັກສະນະຄວາມຫມາຍຂອງການເທສນາວ່າ ຫມາຍເຖິງ "ຄວາມຈິງຂອງພຣະເຈົ້າທີ່ຕັດຫລືເວົ້າຜ່ານທາງບຸກຄົນ ຫລືຄວາມຈິງຂອງພຣະເຈົ້າເວົ້າອອກມາເປັນສຽງໂດຍບຸກຄົນທີ່ໄດ້ຊົງເລືອກສັນ ເພື່ອໃຫ້ຄວາມຈິງນັ້ນຕອບສນອງຕໍ່ຄວາມຕ້ອງການຂອງມະນຸດ" [2]

**ທ່ານໂດແນ່ວ ຈີ. ມິລເລີ** (Donald G. Miller) ໃຫ້ທັສນະວ່າ "ການເທສນານັ້ນບໍ່ແມ່ນເປັນແຕ່ເວົ້າອອກມາຊື່ ໆ ແຕ່ຕ້ອງມີຜົນອອກມາເປັນການກະທຳດ້ວຍ ການເທສນາບໍ່ພຽງແຕ່ຢືນຢູ່ທີ່ທັມມາດແລ້ວເວົ້າ ແລະບໍ່ວ່າຄຳເວົ້ານັ້ນຈະຄົມແລະມີປະສິດທິພາບແນວໃດ ຫລືຈະເວົ້າຫລັກສາສນາສາດໄດ້ຊັດແຈ້ງແນວໃດ ກໍຍັງບໍ່ຖືວ່າເປັນການເທສນາ ການເທສນາຈະຕ້ອງເປັນການທີ່ພຣະເຈົ້າພຣະຜູ້ໄຖ່ໄດ້ຜະເຊີນຫນ້າກັບມະນຸດ ໂດຍຜ່ານທາງຜູ້ເທສນາ ເພາະການເທສນາທີ່ແທ້ຈິງ ຄືກັບວ່າພຣະເຢຊູຄຣິສໄດ້ສະເດັດລົງມາໃນເວລານັ້ນໃນຖ້າມກາງການນມັສການ" [3]

ຈາກທັສນະຕ່າງ ໆ ທີ່ກ່າວມາແລ້ວ ຈະເຫັນໄດ້ວ່າລັກສະນະຂອງການເທສນານັ້ນ ບໍ່ສາມາດແຍກອອກຈາກການເວົ້າໄດ້ ທີ່ຈິງແລ້ວຂ່າວປະເສີດເປັນຂ່າວປະເສີດທີ່ເທສນາອອກມາເປັນສຽງ ການເທສນາ ຄືການເວົ້າເຖິງເຫດການແຫ່ງການຊົງໄຖ່ ຫລືການຊ່ວຍກູ້ຂອງພຣະເຈົ້າ ການເທສນາເປັນສ່ວນນຶ່ງຂອງການທີ່ພຣະເຈົ້າຜະເຊີນຫນ້າກັບມະນຸດ ການເທສນາບໍ່ໄດ້ຫມາຍຄວາມແຕ່ພຽງວ່າສື່ສານເນື້ອຫາເທົ່ານັ້ນ ແຕ່ເນື້ອຫາທີ່ເວົ້າອອກມາມີເຣື່ອງກ່ຽວຂ້ອງກັບການຊົງໄຖ່ຂອງພຣະເຈົ້າ ແມ່ນການກະທຳຂອງພຣະເຈົ້າໃນການຊ່ວຍມະນຸດໃຫ້ຣອດ ແລະເນັ້ນເຖິງຫົນທາງຂອງການປະທານຊີວິດໃຫມ່ແກ່ມະນຸດ ທີ່ມະນຸດຕ້ອງຕອບສນອງໂດຍການຍອມຮັບເອົາ

ດັ່ງນັ້ນພໍຈະສລູບໄດ້ວ່າ ການເທສນາ ຄືການສື່ສານຄວາມຈິງຂອງພຣະເຈົ້າຢ່າງມີປະສິດທິພາບ ຄວາມຈິງນີ້ມີຢູ່ໃນພຣະຄຣິສທັມຄັມພີຂອງຄຣິສຕຽນ ແລະຜູ້ທີ່ຈະສື່ສານຄືຜູ້ທີ່ພຣະເຈົ້າໄດ້ຊົງເອີ້ນໃຫ້ເປັນພະຍານເພື່ອພຣະອົງ ເຖິງການໄຖ່ໂດຍພຣະເຢຊູຄຣິສ ເພື່ອໃຫ້ຜູ້ຟັງໄດ້ຮັບຊີວິດອັນຕລອດໄປເປັນນິດ

## ສາມ. ການເທສນາມີສະຖານະຄວາມສຳຄັນເປັນອັນດັບແຣກ (The Primacy of Preaching

ໃນເວລາທີ່ໂລກຫມຸນວຽນປ່ຽນໄປ ນັກເທດສ່ວນຫລາຍໃຫ້ຄວາມສຳຄັນຜິດກ່ຽວກັບສະຖານະພາບຂອງການເທສນາ ທ່ານຊາມູເອລ ດັບເບິລຢູ ເບລິສສາດ (Samuel W. Blizzard) ໄດ້ໃຊ້ເວລາສອງປີສຳຣວດ ເພື່ອຄົ້ນຫາຄວາມຈິງກ່ຽວກັບບົດບາດຂອງຜູ້ຮັບໃຊ້ແລະການເທສນາ [4] ໂດຍໃຫ້ຜູ້ຮັບໃຊ້ຈຳນວນ 1,300 ຄົນ ຮຽງລຳດັບຄວາມສຳຄັນຂອງບົດບາດຫນ້າທີ່ການຮັບໃຊ້ 6 ຢ່າງ ຄືນັກເທສ ສິດຍາພິບາລ ປະໂຣຫິດ ນາຍຄຣູ ຜູ້ຈັດຕັ້ງອົງການ ແລະຜູ້ບໍຣິຫານ ບົດບາດຫນ້າທີ່ໃດທີ່ຄິດວ່າສຳຄັນໃຫ້ລຳດັບມາກ່ອນ ຜົນປາກົດວ່າມີຫລາຍກວ່າ 700 ຄົນໃຫ້ຄຳຕອບວ່າ

ເຂົາຮູ້ສຶກວ່າ ຜູ້ຮັບໃຊ້ ຄື (1) ນັກເທດ
(2) ສິດຍາພິບາລ
(3) ປະໂຣຫິດ
(4) ນາຍຄຣູ
(5) ຜູ້ຈັດຕັ້ງອົງການ
(6) ຜູ້ບໍຣິຫານ

ຫລັງຈາກນັ້ນກໍໄດ້ມີການສຳຣວດໃຫມ່ ໂດຍໃຫ້ຜູ້ຮັບໃຊ້ເຫລົ່ານັ້ນ ຮຽງລຳດັບບົດບາດໜ້າທີ່ຕາມເວລາທີ່ພວກເຂົາເຮັດໜ້າທີ່ຈິງ ໆ ຜົນປາກົດວ່າ ພວກເຂົາຮູ້ສຶກວ່າ ຄວາມສຳຄັນຂອງໜ້າທີ່ຕາມເວລາທີ່ເຮັດຈິງ ໆ ມີອັນດັບດັ່ງນີ້ (1) ຜູ້ບໍຣິຫານ
(2) ສິດຍາພິບາລ
(3) ປໂຣຫິດ
(4) ຜູ້ຈັດຕັ້ງອົງການ
(5) ນັກເທດ
(6) ນາຍຄຣູ

ເວລາເຮັດວຽກແຕ່ລະມື້ມີ 10 ຊົ່ວໂມງເຄິ່ງ ແຕ່ຜູ້ຮັບໃຊ້ເຫລົ່ານີ້ໃຊ້ເວລາພຽງ 38 ນາທີຕຽມຄຳເທສນາ ສ່ວນເວລາທີ່ໃຊ້ໃນການບໍຣິຫານເປັນ 7 ເທົ່າຂອງເວລາທີ່ໃຊ້ຕຽມເທສນາ ແລະຄົນເຫລົ່ານີ້ ຄືຄົນທີ່ສເນີວ່າການເທສນາມີຄວາມສຳຄັນເປັນອັນດັບແຣກ ຊຶ່ງໃນທາງປະຕິບັດຈິງແທ້ແລ້ວເຂົາລົດຄວາມສຳຄັນຂອງການເທສນາລົງມາເປັນອັນດັບທີຫ້າ

ແມ່ນວ່າຜູ້ຮັບໃຊ້ຈະມີງານແລະໜ້າທີ່ອື່ນ ໆ ຕ້ອງເຮັດຫລາຍແນວໃນການຮັບໃຊ້ພຣະເຈົ້າໃນຄຣິສຈັກ ແຕ່ສິ່ງສຳຄັນທີ່ຜູ້ຮັບໃຊ້ຈະຕ້ອງຮັບໃຊ້ໂດຍຕົງກັບພຣະເຈົ້າຄື "ເທສນາ" ການທີ່ຜູ້ຮັບໃຊ້ຖືວ່າການເທສນາເປັນງານສຳຄັນອັນດັບແຣກ ບໍ່ແມ່ນວ່າຜູ້ຮັບໃຊ້ຕ້ອງເປັນບຸກຄົນທີ່ຍິ່ງໃຫຍ່ ຫລືນັກເວົ້າແຕ່ໝາຍຄວາມວ່າ ເຂົາຕ້ອງເປັນຄົນທີ່ມີຄວາມເຊື່ອໝັ້ນໃນເຣື່ອງຄວາມສຳຄັນຂອງການເທສນາພໍ ທີ່ຈະຖືວ່າເປັນການເທສນາມີຄວາມສຳຄັນເປັນອັນດັບແຣກ ໝາຍຄວາມວ່າຜູ້ຮັບໃຊ້ທີ່ຮັບການຊົງຮຽກຈາກພຣະເຈົ້າຢູ່ໃນຖານະຜູ້ເປີດເຜີຍພຣະວັຈນະ ທີ່ເຫັນນິມິດໝາຍຈາກພຣະເຈົ້າແລ້ວເວົ້າແທນພຣະອົງເຂົາເປັນຜູ້ສົ່ງຂ່າວທີ່ສັດຊື່ ທີ່ຈະນຳຂ່າວຈາກເຈົ້າຊີວິດມາປະກາດ ແລະໝາຍຄວາມວ່າເຂົາຈະເວົ້າເພື່ອເຈົ້າຊີວິດເທົ່ານັ້ນ ບໍ່ແມ່ນເພື່ອສິ່ງອື່ນ ໆ ການວາງຕົວຂອງນັກເທດ ຄວາມເຊື່ອຖືແລະການເບິ່ງນິມິດພາຍໜ້າຈະຕ້ອງເປັນຢ່າງ ທ່ານອາໂມສ ທ່ານອິສຍາ ທ່ານເປໂຕແລະທ່ານໂປໂລ ເນື້ອນັຍຂອງຄຳເທສນາຈະຕ້ອງເປັນການຕີຄວາມໝາຍຕາມຫລັກຄວາມເຊື່ອ ຊຶ່ງເປັນການນຳເອົາຂ່າວປະເສີດມາໃຊ້ໃຫ້ເກີດປໂຍດ ເປັນການເທສນາເຖິງຂ່າວປະເສີດແທ້ ໆ ເພື່ອພຣະເຈົ້າອົງບໍຣິສຸດ

ເມື່ອເຮົາສຶກສາພຣະທັມລູກາ 4:17-21 ກໍຈະພົບວ່າພຣະເຢຊູເປັນພະຍານຢ່າງກ້າຫານວ່າພຣະອົງໄດ້ຮັບການເຈີມໃຫ້ເທສນາແລະປະກາດ ໃນພຣະທັມຕອນນີ້ໄດ້ປາກົດໃຫ້ເຫັນເຖິງຫລັກການຮັບໃຊ້ຂອງພຣະເຢຊູທີ່ສຳຄັນຄື ເທສນາປ່າວປະກາດ ເຮົາເຫັນຫລັກປະຕິບັດຂອງພຣະເຢຊູກ່ຽວກັບການອອກໄປເທສນາສິດສອນຢ່າງຊັດແຈ້ງໃນພຣະທັມມາຣະໂກ 1:38 ພຣະເຢຊູຊົງຕອບເຂົາວ່າ "ໃຫ້ເຮົາທັງຫລາຍໄປໃນເຂດບ້ານເມືອງໃກ້ຄຽງ ເພື່ອເຮົາຈະປະກາດທີ່ນັ້ນດ້ວຍ ເພາະເຫດການນີ້ແຫລະ ເຮົາຈຶ່ງໄດ້ອອກມາ" ພຣະເຢຊູໄດ້ຊົງຖືເອົາການເທສນາເປັນສິ່ງສຳຄັນ

ພວກອັຄສາວົກເຫັນຄວາມສຳຄັນໃນການເທສນາພຣະວັຈນະ ວ່າມີຄວາມສຳຄັນເປັນອັນດັບແຣກຄືກັນ ຈາກການບັນທຶກຂອງພຣະທັມກິຈການ 6:4 ໄດ້ປາກົດໃຫ້ເຮົາໄດ້ເຫັນວ່າພວກອັຄສາວົກໄດ້ເລືອກ 7 ຄົນອອກມາ ເພື່ອຊ່ວຍວຽກງານທຸຣະກິຈຂອງຄຣິສຈັກ ເພື່ອວ່າພວກອັຄສາວົກຈະໄດ້ໃຊ້ເວລາໃນການອ້ອນວອນແລະຮັບໃຊ້ດ້ານພຣະວັຈນະ ທັງນີ້ບໍ່ໄດ້ໝາຍຄວາມວ່າອັຄສາວົກສິບສອງຄົນເຫັນວ່າການແຈກທານບໍ່ມີຄວາມສຳຄັນ ແຕ່ພວກເຂົາຕ້ອງການຜູ້ຊ່ວຍ ເພື່ອຈະມີເວລາພຽງພໍກັບສິ່ງທີ່ສຳຄັນກວ່ານີ້ ຄື "ການເທສນາພຣະວັຈນະຂອງພຣະເຈົ້າ"

ການເທສນາມີສ່ວນສຳຄັນໃນການປ່າວປະກາດຂ່າວປະເສີດ ເພາະທ່ານໂປໂລກ່າວວ່າ "ຜູ້ທີ່

ຍັງບໍ່ໄດ້ຍິນເຖິງເຣື້ອງພຣະອົງນັ້ນ ຈະເຊື່ອໃນພຣະອົງໄດ້ຢ່າງໃດ ແລະເມື່ອບໍ່ມີຜູ້ໃດປະກາດໃຫ້ເຂົາຟັງ ເຂົາຈະໄດ້ຍິນເຖິງເຣື້ອງພຣະອົງຢ່າງໃດ ... ດັ່ງນັ້ນຄວາມເຊື່ອເກີດຂຶ້ນໄດ້ກໍເພາະການໄດ້ຍິນ ແລະການໄດ້ຍິນເກີດຂຶ້ນໄດ້ກໍເພາະການປະກາດເຣື້ອງພຣະຄຣິສ" (ໂຣມ 10:14, 17) ທ່ານໂປໂລໄດ້ເຕືອນຕີໂມທຽວວ່າ "ຈົ່ງເທສນາພຣະວັຈນະ ຈົ່ງເອົາໃຈໃສ່ເຣັດການ.. ຈົ່ງຊັກຊວນດ້ວຍເຫດຜົນ ຈົ່ງເຕືອນສະຕິ ແລະຈົ່ງໜູນໃຈດ້ວຍຄວາມພຽນອົດທົນທຸກຢ່າງໃນການສິດສອນ" (2 ຕີໂມທຽວ 4:2) ທ່ານໂປໂລກ່າວກັບຕີໂຕວ່າ "ໃນເວລາທີ່ພຣະອົງໄດ້ຊົງກຳນົດໄວ້ ກໍໄດ້ຊົງສະແດງພຣະທັມຂອງພຣະອົງໃຫ້ປາກົດດ້ວຍການປະກາດ ຊຶ່ງເຮົາໄດ້ຮັບມອບໄວ້ຕາມພຣະບັນຊາຂອງພຣະເຈົ້າ ຜູ້ຊົງໂຜດເຮົາທັງຫລາຍໃຫ້ພົ້ນ" (ຕີໂຕ 1:3)

ຖ້າຜູ້ຮັບໃຊ້ຂອງພຣະເຈົ້າ ມີຄວາມເຂົ້າໃຈເຖິງສະຖານະພາກຂອງການເທສນາຢ່າງແທ້ຈິງວ່າເປັນວຽກການສຳຄັນອັນດັບແຣກໃນການຮັບໃຊ້ ແລະອຸທິດເວລາໃຫ້ ພ້ອມທັງໃຫ້ຄວາມສົນໃຈໃນວຽກງານນີ້ ເຂົາຈະຖືໄດ້ວ່າ ເຂົາເປັນຜູ້ຮັບໃຊ້ທີ່ເດີນຕາມແບບຂອງຜູ້ເຜີຍພຣະວັຈນະ ອັຄສາວົກແລະພຣະເຢຊູຄຣິສເຈົ້າ

## ສີ່. ຈຸດປະສົງຂອງການເທສນາ (The Objectives of Preaching

ການທີ່ຈະມີຄວາມເຂົ້າໃຈເຖິງຈຸດປະສົງຂອງການເທສນານັ້ນ ມີຄວາມສຳຄັນແກ່ນັກເທດໃນການຕະຕຽມການເທສນາ ການກຳໜົດຈຸດປະສົງນັ້ນເປັນການກຳໜົດຄວາມຄິດ ຊີວິດຈິດໃຈ ໃຫ້ເກີດເປົ້າໝາຍຫລືຜົນສຳເຣັດ ຄຳວ່າ "ຈຸດປະສົງ" (Objective) ມີຄວາມໝາຍໃນການເທສນາລວມໄປເຖິງຈຸດປະສົງສູງສຸດ (ຫລືຈຸດປະສົງທັງມວລ) ຂອງການເທສນາ ແລະລວມໄປເຖິງຈຸດປະສົງຂອງການເທສນາແຕ່ລະເທື່ອ

### 1. ຈຸດປະສົງສູງສຸດ (ຫລືຈຸດປະສົງທັງມວລ, Total Objective) ຂອງການເທສນາ

ຈຸດປະສົງສູງສຸດຂອງການເທສນາ ເປັນຈຸດປະສົງຢ່າງດຽວກັບທີ່ພຣະຄຣິສໄດ້ສະເດັດເຂົ້າມາໃນໂລກນີ້ ພຣະອົງຕັດວ່າ "ຝ່າຍເຮົາໄດ້ມາເພື່ອເຂົາຈະໄດ້ຊີວິດ ແລະຈະໄດ້ຢ່າງຄົບບໍຣິບູນ" (ໂຢຮັນ 10:10) ນີ້ເປັນຈຸດປະສົງທີ່ສຳຄັນຄອບຄຸມໄປເຖິງວຽກການຮັບໃຊ້ທັງມວລຂອງພຣະເຢຊູຄຣິສ ທີ່ພຣະອົງໄດ້ວາງແບບຢ່າງໄວ້ສຳລັບຜູ້ຮັບໃຊ້ຂອງພຣະອົງ ທີ່ຈະເສັຽສະລະແລະອຸທິດຕົວເພື່ອຊີວິດຂອງມະນຸດ ຄຳວ່າ "ຊີວິດ" ມີຄວາມໝາຍລຶກຊຶ້ງ ໝາຍເຖິງຊີວິດນິຣັນໃນອານາຄົດ ແລະໝາຍລວມເຖິງຊີວິດທີ່ດຳເນີນໃນໂລກນີ້ຢ່າງຄົບບໍຣິບູນ "ຊີວິດ" ນັ້ນເປັນສິ່ງທີ່ມີຄວາມຜົວພັນກັບຜູ້ຮັບໃຊ້ຂອງພຣະເຈົ້າດັ່ງນີ້

(1) ມີຜູ້ຮັບໃຊ້ຂອງພຣະເຈົ້າເປັນຜູ້ທີ່ຈະເທສນາສິດສອນໃຫ້ຄຳແນະນຳໃນທົນທາງການດຳເນີນຊີວິດໃຫ້ເປັນໄປຕາມນໍ້າພຣະທັຍຂອງພຣະເຈົ້າ
(2) ມີຜູ້ຮັບໃຊ້ຂອງພຣະເຈົ້າເປັນຜູ້ທີ່ຈະວາງແຜນການໃນການອະພິບາລເບິ່ງແຍງສິດ
(3) ແລະມີຜູ້ຮັບໃຊ້ພຣະເຈົ້າເປັນຜູ້ຈັດຕັ້ງອົງການຫລືໜ່ວຍງານຕ່າງ ໆ ເພື່ອສນັບສນຸນໃຫ້ຊີວິດນັ້ນຈະເຣີນເຕີບໂຕສູ່ຄວາມບໍຣິບູນໃນພຣະເຢຊູຄຣິສ

ຖ້າຜູ້ເປັນສິດຍາພິບາລມີຄວາມເຂົ້າໃຈເຖິງຈຸດປະສົງອັນສູງສຸດຂອງພຣະເຢຊູຄຣິສໃນວຽກການ

ທັງສາມດັ່ງທີ່ໄດ້ກ່າວໄປແລ້ວນັ້ນ ກໍຈໍາເປັນຕ້ອງມີການດໍາເນີນວຽກການຮັບໃຊ້ພຣະເຈົ້າດ້ວຍຄວາມສົມດູລພຽງກັນໃນວຽກທັງສາມ ເພື່ອໃຫ້ບຸກຄົນທີ່ພຣະເຈົ້າເລືອກສັນໃຫ້ມີຊີວິດຢູ່ຢ່າງສົມບູນ

## 2. ຈຸດປະສົງຫລັກ (Major Objectives)

ເມື່ອເຮົາໄດ້ເຫັນຈຸດປະສົງສູງສຸດແລ້ວ ຄື "ຊີວິດຄົບບໍຣິບູນ" ແຕ່ໃນການເທສນາແຕ່ລະເທື່ອຕ້ອງມີຈຸດປະສົງໃນຕົວເອງ ທີ່ຈະສອດຄ້ອງກັບຈຸດປະສົງສູງສຸດ ຈຸດປະສົງທີ່ລອງລົງມານີ້ມີຈຸດປະສົງຫລັກໃຫຍ່ ໆ 6 ຈຸດປະສົງດ້ວຍກັນ ຈຸດປະສົງທັງ 6 ນີ້ຕັ້ງຂຶ້ນຕາມຄວາມຂາດເຂີນຂອງກອງປະຊຸມທີ່ຜູ້ຮັບໃຊ້ຈະຊ່ວຍສົ່ງເສີມໃຫ້ເຂົາມີຊີວິດທີ່ຄົບບໍຣິບູນ

**ກອງປະຊຸມ** (1) ຕ້ອງການຄວາມຣອດພົ້ນ
(2) ຕ້ອງການເຕີບໂຕໃນການນະມັສການພຣະເຈົ້າ
(3) ຕ້ອງການພັດທະນາໃຫ້ມີຄວາມເຂົ້າໃຈຄວາມຈິງຂອງພຣະເຈົ້າຢ່າງຜູ້ທີ່ຈະເຣີນເຕີບໂຕເປັນຜູ້ໃຫຍ່
(4) ຕ້ອງການມີຊີວິດທີ່ມີສັມພັນທະພາບທີ່ດີຂຶ້ນກັບຜູ້ອື່ນ
(5) ຕ້ອງການຮັບໃຊ້ພຣະເຈົ້າດ້ວຍການເສັຍສລະຫລາຍຂຶ້ນ
(6) ຕ້ອງການກໍາລັງໃຈແລະການເລົ້າໂລມໃຈ ເມື່ອປະສົບກັບຄວາມທຸກຍາກ

ໃນການເທສນາແຕ່ລະເທື່ອນັກເທດຄວນຈະຕ້ອງພິຈາຣະນາຄໍາເທສນາຂອງຕົນໃຫ້ຕອບສະນອງຄວາມຕ້ອງການໃນຂໍ້ນຶ່ງຂໍ້ໃດໃນຫົກປະການທີ່ກ່າວມານີ້

## 3. ຈຸດປະສົງໃນໂອກາດພິເສດ (Specific Objectve)

ຄວາມຕ້ອງການຂອງກອງປະຊຸມ 6 ປະການເປັນຈຸດປະສົງຫລັກທີ່ຜູ້ເປັນສິດຍາພິບາລຕ້ອງຄົ້ນຄ້ວາຊອກຫາຄໍາເທສນາມາບໍາຣຸງລ້ຽງສມາຊິກ ນອກຈາກນັ້ນສິດຍາພິບາລຍັງຕ້ອງມີຈຸດປະສົງພິເສດສໍາລັບຄໍາເທສນາໃນໂອກາດຕ່າງ ໆ ບາງເທື່ອອາດຈະເປັນໂອກາດທີ່ຄຣິສຈັກຕ້ອງການເນັ້ນຫນັກກິຈກັມບາງຢ່າງໃນການຮັບໃຊ້ພຣະເຈົ້າ ສິດຍາພິບາລກໍຕ້ອງມີຈຸດປະສົງພິເສດໃນການເທສນາໃຫ້ເຂົ້າກັບໂອກາດແລະການເນັ້ນຫນັກຂອງຄຣິສຈັກ ຢ່າງໃດກໍຕາມຈຸດປະສົງພິເສດທີ່ກໍາຫນົດນັ້ນຕ້ອງກ່ຽວຂ້ອງຢ່າງໃກ້ຊິດກັບຈຸດປະສົງສູງສຸດແລະຈຸດປະສົງຫລັກຂອງການເທສນາ ເຮົາເອີ້ນວ່າ ເປັນການພັດທະນາຈາກຈຸດປະສົງທົ່ວ ໆ ໄປໃຫ້ເປັນຈຸດປະສົງທີ່ສະເພາະເຈາະຈົງ

ໃນສັງຄົມຄຣິສຕຽນຂອງຊາວເອເຊັຍມັກຈະມີຄວາມເຫັນວ່າ ໃນໂອກາດພິເສດຕ່າງ ໆ ຂອງຄອບຄົວຕ້ອງໃຫ້ກຽດພຣະເຈົ້າ ດັ່ງນັ້ນເມື່ອມີໂອກາດພິເສດໃນຄອບຄົວກໍຈະຂໍໃຫ້ຜູ້ຮັບໃຊ້ຂອງພຣະເຈົ້າມີພາກສ່ວນກ່ຽວຂ້ອງໃນພິທີຕ່າງ ໆ ເຫລົ່ານັ້ນ ແລະເປີດໂອກາດໃຫ້ຜູ້ຮັບໃຊ້ຂອງພຣະເຈົ້າໄດ້ກ່າວພຣະວັຈນະ ຊຶ່ງເປັນການເທສນາພິເສດອີກແບບນຶ່ງ ໃນຖານະທີ່ເປັນຜູ້ຮັບໃຊ້ຂອງພຣະເຈົ້າຈໍາເປັນຕ້ອງຮູ້ຈັກຕຽມຕົວແລະຄໍາເທສນາໃຫ້ຖືກຕ້ອງກັບໂອກາດ ໃຫ້ຖວາຍກຽດແກ່ພຣະເຈົ້າຕາມທີ່ເຈົ້າພາບໄດ້ຕັ້ງຄວາມຫວັງໄວ້ ການທີ່ຈະກ່າວສິ່ງນຶ່ງປະການໃດຄວນມີຄວາມຫນັກແຫນ້ນ ແລະຍົກຍໍເຊີດຊູພຣະເຈົ້າໃຫ້ຜູ້ຟັງຊຶ່ງອາດຈະເປັນທັງຄຣິສຕຽນແລະບໍ່ເປັນຄຣິສຕຽນເຫັນດ້ວຍ ການທີ່ຈະຖືໂອກາສກ່າວຕໍາຫນິຕິຕຽນກໍອາດຈະໃຫ້ເກີດຜົນເສັຍຫລາຍກວ່າການເສີມສ້າງ ເຮົາຕ້ອງຮູ້ຈັກວ່າ ຜູ້ຟັງທີ່ຮ່ວມພິທີອັນພິເສດນີ້ ມີ

ຄວາມແຕກຕ່າງກັນຜູ້ຟັງທີ່ນັ່ງຟັງຢູ່ໃນຄຣິສຈັກຂອງເຮົາ ຊຶ່ງຄົນສ່ວນຫລາຍທີ່ມາໃນພິທີນັ້ນ ມີຈຸດປະສົງທີ່ແຕກຕ່າງກັບຜູ້ທີ່ນມັສການພຣະເຈົ້າຢູ່ໃນຄຣິສຈັກຂອງເຮົາ ທີ່ກ່າວເຊັ່ນນີ້ເປັນສິ່ງທີ່ເຫັນຈາກຕົວຈິງມາແລ້ວ ແຕ່ກໍບໍ່ໄດ້ຫມາຍຄວາມວ່າ ເຮົາຈະປະກາດຄວາມເຊື່ອຂອງເຮົາບໍ່ໄດ້ ແຕ່ຫມາຍຄວາມວ່າ ເຮົາຕ້ອງສເນີຄຳເທສນາຂອງເຮົາໃນລັກສະນະທີ່ບໍ່ໄດ້ທຳລາຍຄວາມຕັ້ງໃຈຂອງເຈົ້າພາບ ທີ່ຕ້ອງການຖວາຍກຽດແກ່ພຣະເຈົ້າ ແລະເປັນຄຳເທສນາທີ່ຜູ້ຟັງເຫລົ່ານັ້ນສາມາດຮັບຟັງໄດ້ ແລະເປັນເຫດຊັກຈູງໃຫ້ຜູ້ຟັງຢາກຈະຕິດຕາມຜູ້ຮັບໃຊ້ໄປຄຣິສຈັກຟັງຕໍ່ທີ່ຄຣິສຈັກ ຫລືໃຫ້ຄວາມເຄົາຣົບຕໍ່ຄວາມເຊື່ອຂອງຄຣິສຕຽນ ຈຸດປະສົງຂອງການເທສນາຊະນິດນີ້ພິເສດແທ້ ເພາະຈະບໍ່ຕາມແຜນການຂ້າງຕົ້ນທີ່ໄດ້ກ່າວມາ ຈະມີຈຸດປະສົງສະເພາະຕົວໃນແຕ່ລະໂອກາດທີ່ໄດ້ຮັບເຊີນໃຫ້ເທສນາ ເຊັ່ນ ການເທສນາໃນໂອກາສຂຶ້ນບ້ານໃຫມ່ ງານແຕ່ງງານ ງານວັນເກີດ ພິທີສົ່ງສະການ ເປັນຕົ້ນ ຄຳເທສນາທີ່ໃຊ້ໃນງານເຫລົ່ານີ້ ຕ້ອງມີຈຸດປະສົງພິເສດ ທີ່ຊັກຈູງໃຈຜູ້ຟັງໃຫ້ເຂົ້າໃກ້ພຣະເຈົ້າ ສະແດງເຖິງຄວາມຮັກ ຄວາມຜູກພັນຫ່ວງໃຍຂອງພຣະເຈົ້າທີ່ມີຕໍ່ມະນຸດ ຈະຕ້ອງເລືອກສັນຫາຄຳເທສນາຄວາມເວົ້າໃຫ້ເຫມາະສົມ ຊຶ່ງແຕກຕ່າງໄປຈາກການເທສນາໂດຍທົ່ວໄປໃນຄຣິສຈັກ

## ຫ້າ. ອົງປະກອບຂອງການເທສນາ (The Components of Preaching)

ການເທສນາຈະມີຂຶ້ນໄດ້ຕ້ອງມີອົງປະກອບທີ່ເປັນສ່ວນສຳຄັນສີ່ປະການ ອົງປະກອບທັງສີ່ກ່ຽວຂ້ອງພົວພັນກັນ ທີ່ນັກເທດຈະຕ້ອງມີຄວາມຮູ້ຄວາມເຂົ້າໃຈ ເພື່ອຈະເຮັດໃຫ້ການເທສນາເກີດຜົນຢ່າງມີປະສິດທິພາບ ອົງປະກອບທັງສີ່ປະການມີດັ່ງນີ້ຄື

1. ຄົນຜູ້ເທສນາ (The Preacher)
2. ຄົນຜູ້ຟັງຄຳເທສນາ (The Audience)
3. ຄຳເທສນາ (The Sermon Text)
4. ວິທີການເທສນາ (The Delivery of the Sermon)

ລາຍລະອຽດຂອງອົງປະກອບທັງສີ່ນີ້ຈະໄດ້ສເນີໃນບົດຕໍ່ ໆ ໄປ ເປັນບົດ ໆ ທີ່ລະຫົວຂໍ້ ເພື່ອຊ່ວຍໃຫ້ນັກສຶກສາເກີດຄວາມເຂົ້າໃຈຢ່າງຊັດແຈ້ງໃນແຕ່ລະຫົວຂໍ້ ແລະສາມາດນຳເອົາແຕ່ລະອົງປະກອບມາກ່ຽວຂ້ອງພົວພັນກັນ ເພື່ອໃຊ້ພິຈາຣະນາໃນການເທສນາພຣະວັຈນະຂອງພຣະເຈົ້າ

---

### ຂໍ້ອ້າງອີງ


[1] Phillips Brooks, **Lectures on Preaching**, (London: Griffith, Farrar & Co., 1877), p.5.

[2] Andrew W. Blackwood, **The Preparation of Sermon**, (New York: Abingdon-Cokesbury Press, 1948), p.13.

[3] Donald G. Miller, **Fire in Thy Mouth**, (New York: Abingdon Press, 1954), p. 17.

[4] Samuel W. Blizzard **"The Roles of Rural Parish Minister, the Protestant Seminaries, and the Sciences of Social Behavior,"** Religious Education (November- December, 1955), pp. 383-392.

# ບົດທີ 2
# ຄົນຜູ້ເທສນາ
## The Preacher

*"ເພາະເມື່ອຂ້າພະເຈົ້າ(ໂປໂລ)ເທສນາຂ່າວປະເສີດນັ້ນ ຂ້າພະເຈົ້າບໍ່ມີເຫດທີ່ຈະອວດອ້າງໄດ້ ເພາະຈຳເປັນທີ່ຂ້າພະເຈົ້າຕ້ອງເທສນາ ວິບັດຈະເກີດແກ່ຂ້າພະເຈົ້າຖ້າຂ້າພະເຈົ້າບໍ່ເທສນາຂ່າວປະເສີດ ເພາະຖ້າຂ້າພະເຈົ້າເທສນາດ້ວຍໃຈສະມັກຂ້າພະເຈົ້າກໍຈະໄດ້ບຳເຫນັດ (ສິນຈ້າງ) ຖ້າບໍ່ເປັນການສະມັກໃຈ ຂ້າພະເຈົ້າກໍເທສນາຕາມຄວາມວາງໃຈທີ່ໄດ້ຊົງມອບໄວ້ໃຫ້ກັບຂ້າພະເຈົ້າ ແລ້ວບຳເຫນັດຂອງຂ້າພະເຈົ້າຄືອັນໃດ? ຄືເມື່ອຂ້າພະເຈົ້າເທສນາຂ່າວປະເສີດຂ້າພະເຈົ້າບໍ່ໄດ້ຄິດຄ່າຈ້າງ ແລະບໍ່ໄດ້ໃຊ້ສິດຂອງຂ້າພະເຈົ້າໃນການເທສນານັ້ນຢ່າງຄົບຖ້ວນ*

*(1 ໂກຣິນໂທ 9:16-18 NIV)*

ໃນບົດທີ 1 ເຣົາໄດ້ຣຽນຮູ້ຈັກພື້ນຖານໂດຍທົ່ວໄປຂອງການເທສນາ ວ່າການເທສນາພຣະວັຈນະຂອງພຣະເຈົ້ານັ້ນ ໂດຍມີຄົນຜູ້ໄດ້ຣັບການເອີ້ນຈາກພຣະເຈົ້າ ເປັນຜູ້ເທສນາທີ່ສື່ສານພຣະວັຈນະຂອງພຣະເຈົ້າ ໃຫ້ແກ່ຜູ້ຟັງທີ່ເປັນຄົນຄືກັນຟັງ ດັ່ງນັ້ນໃນບົດນີ້ ເຣົາຈະກ່າວເຖິງ ຄົນຜູ້ເທສນາ ຫລືນັກເທດ

ຜູ້ທີ່ຢືນຂຶ້ນເວົ້າທີ່ທັມມາສນັ້ນ ບໍ່ແມ່ນວ່າຈະເປັນຜູ້ໃດກໍໄດ້ທີ່ຈະເທສນາພຣະວັຈນະຂອງພຣະເຈົ້າ ວຽກການເທສນາເປັນວຽກຂອງພຣະເຈົ້າໂດຍຕົງ ຜູ້ທີ່ຈະເຣັດໜ້າທີ່ນີ້ໄດ້ແມ່ນຕ້ອງເປັນຜູ້ທີ່ພຣະເຈົ້າຣຽກເອີ້ນ ໃນປວັດສາດພຣະເຈົ້າຣຽກເອີ້ນຜູ້ເຜີຍພຣະວັຈນະ ເຊັ່ນ ທ່ານອາໂມສ ທ່ານອິສຢາ ທ່ານເປໂຕ ທ່ານໂປໂລ ອັຄສາວົກສິບສອງຄົນ ແລະນັກເທສຜູ້ຍິ່ງໃຫຍ່ອີກຫລາຍທ່ານ ໃນປັດຈຸບັນນີ້ພຣະອົງກໍຊົງຣຽກເອີ້ນຜູ້ຮັບໃຊ້ຂອງພຣະອົງຄືກັນ ພື້ນຖານການຊົງຣຽກເອີ້ນຂອງພຣະເຈົ້າຂຶ້ນຢູ່ກັບນ້ຳພຣະທັຍຂອງພຣະອົງ ແລະຄວາມພໍໃຈຂອງພຣະອົງສເມີ ພຣະອົງເປັນຜູ້ຄັດເລືອກວ່າ ຜູ້ໃດເປັນຕົວແທນຂອງພຣະອົງ ທີ່ຈະເປີດເຜີຍພຣະວັຈນະທີ່ເປັນນ້ຳພຣະທັຍແລະພຣະປະສົງຂອງພຣະອົງ

ຄົນຜູ້ທີ່ພຣະເຈົ້າຣຽກໃຊ້ໃຫ້ເທສນາຂ່າວປະເສີດ ຈະຕ້ອງເປັນຜູ້ທີ່ອຸທິດຊີວິດໃຫ້ພຣະເຈົ້າ ບໍ່ວ່າຈະເປັນຊີວິດຕໍ່ໜ້າສາທາຣານະຊົນຫລືຊີວິດສ່ວນຕົວ ຄວາມຄິດຂອງເຂົາບໍ່ວ່າຈະເປັນຄວາມຄິດທາງດ້ານສິລທັມ ຄວາມເຂົ້າໃຈໃນເຣື່ອງຈະຣິຍະທັມ ການສະແດງອອກທາງອາຣົມ ຫລືຄວາມສາມາດທາງກາຍ ເຂົາຈະຕ້ອງມອບຖວາຍໃຫ້ກັບພຣະເຈົ້າ ຄົນທີ່ພຣະເຈົ້າຣຽກໃຫ້ເທສນາພຣະວັຈນະຂອງພຣະອົງຈະຕ້ອງເປັນຜູ້ທີ່ມີສາມັກຄີທັມກັບພຣະອົງຢູ່ສເມີ ບໍ່ມີຜູ້ໃດເທສນາໄດ້ເກ່ງນອກຈາກເຂົາຈະອະທິຖານຫລາຍ ບໍ່ມີນັກເທດຜູ້ໃດຈະໄດ້ຣັບໃຫ້ຍົກຂຶ້ນສູງ ເວັ້ນແຕ່ວ່າເຂົາຈະສາມາດຍົກຊີວິດຝ່າຍຈິດວິນຍານໃຫ້ຂຶ້ນສູງດ້ວຍການສັມຜັດກັບພຣະເຈົ້າກ່ອນ ດັ່ງນັ້ນແລ້ວນັກເທດຕ້ອງເປັນນັກທັມທຳຕາມທີ່ເຂົາເທດ ນັ້ນໝາຍຄວາມວ່າເຂົາຍອມຂັບຕາມທັມຢ່າງທີ່ເຂົາເທສນາ ເພື່ອອຸທິດຮັກສາຊີວິດຂອງຕົນໃຫ້ບໍຣິສຸດໃຫ້ເປັນ

ເຄື່ອງມືຮັບໃຊ້ຂອງພຣະເຈົ້າໂດຍສະເພາະ ຈາກຂໍ້ພຣະທັມໂກຣິນໂທສະບັບຕົ້ນ ບົດທີ 9:16-18 ຈະເຫັນໄດ້ວ່າທ່ານໂປໂລອຸທິດຊີວິດຂອງທ່ານໃຫ້ພຣະເຈົ້າໃຊ້ງານຢ່າງແທ້ຈິງ ໂດຍທີ່ທ່ານບໍ່ເຫັນແກ່ຄວາມສຳຄັນທີ່ຈະໄດ້ບຳເໜັດຫລືສິນຈ້າງ ທ່ານເຫັນວ່າການເທສນາຕາມທີ່ພຣະເຈົ້າມອບໄວ້ເປັນບຳເໜັດຣາງວັນໃນຕົວເອງ ເປັນພຣະຄຸນຂອງພຣະເຈົ້າທີ່ໄດ້ເປັນເຄື່ອງມືໃຫ້ພຣະອົງໃຊ້ງານ ດ້ວຍເຫດນີ້ຣິດອຳນາດທີ່ພຣະເຈົ້າໄດ້ຊົງມອບໄວ້ໃຫ້ແກ່ທ່ານ ຈຶ່ງເກີດຜົນຢ່າງຫລວງຫລາຍ ໃນທີ່ນີ້ມີຄວາມຈິງປະການນຶ່ງທີ່ສຳຄັນແລະເປັນແບບຢ່າງແກ່ພວກເຮົາ ທ່ານເປັນຄົນຂອງພຣະເຈົ້າແລະດຳເນີນຊີວິດຂັບຕາມຄວາມຈິງທີ່ພຣະອົງໄດ້ມອບໃຫ້ ຄົນຜູ້ທີ່ເປັນນັກເທດສົມຄວນຕ້ອງມີຄຸນສົມບັດດັ່ງນີ້

1) ນັກເທດເປັນຄົນຂອງພຣະເຈົ້າ
2) ນັກເທດເປັນຄົນແຫ່ງພຣະວັຈນະຂອງພຣະເຈົ້າ
3) ນັກເທດເປັນຄົນທີ່ມີຄວາມຈົ່ງຮັກພັກດີຕໍ່ພຣະເຈົ້າ
4) ນັກເທດເປັນຄຣິສຕຽນ
5) ນັກເທດເປັນຄົນ
6) ນັກເທດເປັນນັກຄິດ

## ນຶ່ງ. ນັກເທດເປັນຄົນຂອງພຣະເຈົ້າ
(The Preacher is a Man of God)

ການທີ່ກ່າວວ່ານັກເທດເປັນຄົນຂອງພຣະເຈົ້າ ບໍ່ແມ່ນວ່ານັກເທດຄົນນັ້ນຈະໃຊ້ຄວາມຈິງຂໍ້ນີ້ເປັນ "ບັດເບັ່ງ" ໃຊ້ອວດທັບຖົມຄົນອື່ນ ຫລືເພື່ອເຣັດຫຍັງກໍໄດ້ຕາມຄວາມພໍໃຈຂອງຕົນ ຫລືຮຽກຮ້ອງສິດທິພິເສດອັນໃດໃຫ້ເໜືອໄປກວ່າເພື່ອນມະນຸດດ້ວຍກັນ ແຕ່ຄວາມຈິງຂໍ້ນີ້ເປັນພັນທະຜູກມັດຕົວຜູ້ທີ່ເປັນນັກເທດວ່າ ຊີວິດແລະຄວາມເປັນຢູ່ຂອງເຂົາເປັນຂອງພຣະເຈົ້າ ຄືພຣະເຈົ້າເປັນເຈົ້າຂອງຊີວິດແລະຄວາມເປັນຢູ່ ດັ່ງທີ່ທ່ານໂປໂລກ່າວວ່າ "ໂປໂລຜູ້ຮັບໃຊ້ຂອງພຣະຄຣິສ" (ຣມ 1:1, ຕຕ 1:1) ທ່ານໂປໂລຍອມສລະຖິ້ມສິ່ງສາຣະພັດ ເພື່ອທ່ານຈະເປັນຄົນຂອງພຣະເຈົ້າໄດ້ຢ່າງແທ້ຈິງ (ອ່ານ ຟປ 3:8) ຖ້ານັກເທດເປັນຄົນທີ່ຍັງຕິດຢູ່ກັບວິຖີຂອງໂລກກໍຈະບໍ່ເທສນາຕາມນ້ຳພຣະທັຍຂອງພຣະເຈົ້າ ພຣະວັຈນະແຫ່ງຄວາມຈິງຈາກພຣະເຈົ້າຈະໄປເຖິງປະຊາຊົນຂອງພຣະອົງໄດ້ຊັດແຈ້ງ ຕ້ອງຜ່ານບຸກຄົນຜູ້ທີ່ເປັນຂອງພຣະອົງ ເວົ້າໃນຖານະທີ່ເປັນຜູ້ທີ່ຢູ່ຝ່າຍຂອງພຣະອົງ

ການທີ່ເປັນຄົນຂອງພຣະເຈົ້າ ບໍ່ແມ່ນຕ້ອງເປັນຄົນຜູ້ມີອິດທິພົນຢ່າງທີ່ໂລກນີ້ນິຍົມກັນ ແຕ່ເປັນຄົນຂອງພຣະຜູ້ເປັນເຈົ້າ ພຣະອົງເປັນເຈົ້າຂອງສາຣພັດສິ່ງທັງປວງລວມທັງມະນຸດ້ວຍ ແລະການທີ່ຈະເປັນຄົນຂອງພຣະເຈົ້າໄດ້ບໍ່ແມ່ນເພາະຕົນເອງສ້າງບຸນບາຣະມີອັນໃດຂຶ້ນ ແຕ່ເປັນເພາະພຣະເຈົ້າຮຽກເອີ້ນໃຫ້ຄົນຜູ້ນັ້ນເຂົ້າມາຮັບໃຊ້ ໜ້າທີ່ຕຳແໜ່ງນີ້ເປັນພຣະຄຸນຂອງພຣະເຈົ້າຝ່າຍດຽວ ສະນັ້ນຄົນຂອງພຣະເຈົ້າຈະຕ້ອງເປັນຄົນທີ່ມີໃຈຖ່ອມ ແລະເຫັນແກ່ພຣະຄຸນຂອງພຣະເຈົ້າຢູ່ສເມີ

## ສອງ. ນັກເທດເປັນຄົນແຫ່ງພຣະວັຈນະຂອງພຣະເຈົ້າ
(The Preacher is a Man of the Word of God)

ພຣະວັຈນະ ຄື "ຄຳເວົ້າ" ເປັນສຽງທີ່ເປ່ງອອກມາຈາກປາກ ເບິ່ງຄືວ່າບໍ່ໜ້າຈະມີຣິດເດດ

ອຳນາດອັນໃດ ແຕ່ພຣະວັຈນະຂອງພຣະເຈົ້າເປັນພຣະດຳຣັສ (ການຕັດ) ຂອງພຣະເຈົ້າ ຖ້າພຣະດຳຣັສຂອງພຣະເຈົ້າເປັນເຣື້ອງກ່ຽວກັບທັມຊາດ ພຣະດຳຣັສກໍປາກົດເປັນທັມຊາດໄດ້ "ໃຫ້ສັດຕ່າງ ໆ ຄືສັດບ້ານ ສັດປ່າ ແລະສັດເລືອຍຄານເກີດມີຂຶ້ນທົ່ວໂລກ" ນັ່ນເປັນພຣະດຳຣັສຂອງພຣະເຈົ້າ ດັ່ງທີ່ໄດ້ປາກົດໃນພຣະທັມປະຖົມການ 1:24 ແລະຈົນປັດຈຸບັນນີ້ທົ່ວໂລກກໍຍັງມີສັດຕ່າງ ໆ ເກີດຂຶ້ນບໍ່ໄດ້ຢຸດຍັ້ງຈາກພຣະດຳຣັສຂອງພຣະເຈົ້າ ເຮົາເຫັນໄດ້ແລ້ວວ່າ ພຣະວັຈນະຂອງພຣະເຈົ້າມີຣິດທານຸພາບສູງ ນັກເທດຈຳເປັນຕ້ອງເປັນຄົນແຫ່ງພຣະວັຈນະຂອງພຣະເຈົ້າ ທີ່ຈະໃຊ້ພຣະວັຈນະເປັນອາວຸດ ທ່ານໂປໂລກ່າວວ່າ "ເພາະວ່າເຄື່ອງອາວຸດຂອງເຮົາບໍ່ເປັນຝ່າຍໂລກ ແຕ່ມີຣິດອຳນາດຈາກພຣະເຈົ້າ ອາດທຳລາຍຄ້າຍອັນເຂັ້ມແຂງໄດ້ ຄືທຳລາຍຄວາມຄິດທີ່ມີເຫດຜົນອັນບໍ່ຈິງ ແລະຄວາມດື້ດຶງທຸກປະການ ທີ່ຕັ້ງຕົວຂຶ້ນຂັດຂວາງຄວາມຮູ້ຈັກພຣະເຈົ້າ ແລະບາບຄວາມຄິດທຸກປະການລົງໃຫ້ຢູ່ໃຕ້ບັງຄັບ ຈົນເຖິງນ້ອມຟັງພຣະຄຣິສ" (2 ກທ 10:4-5) ພຣະທັມເຮັບເຣີກ່າວອີກວ່າ "ເພາະວ່າພຣະທັມຂອງພຣະເຈົ້າປະກອບດ້ວຍຊີວິດແລະຣິດເດດ ຄົມກວ່າດາບສອງຄົມທຸກດວງ ແທງຊອດເຖິງຈິດໃຈແລະວິນຍານຕລອດທັງຂໍ່ກະດູກແລະໄຂໃນກະດູກຕິດຕໍ່ກັນ ຈຶ່ງສັງເກດຮູ້ຄວາມຄິດແລະຄວາມມຸ້ງໝາຍໃນໃຈໄດ້" (ຮຣ 4:12) ດັ່ງນັ້ນຄຳເທສນາຈະເກີດຣິດອຳນາດໄດ້ກໍຕໍ່ເມື່ອຜູ້ເທສນາເປັນຄົນຂອງພຣະເຈົ້າກ່າວຄຳທີ່ມາຈາກພຣະເຈົ້າ ຕາມພຣະປະສົງຂອງພຣະອົງ

ພຣະວັຈນະຂອງພຣະເຈົ້າເປັນຂ່າວສານຈາກພຣະເຈົ້າມາເຖິງມະນຸດ ທີ່ຄົນແຫ່ງພຣະວັຈນະຂອງພຣະເຈົ້າຈະເວົ້າຄືກັບວ່າ ພຣະວັຈນະນັ້ນບໍ່ໄດ້ອອກມາຈາກຕົວຂອງເຂົາ ແຕ່ມາຈາກພຣະເຈົ້າ ແລະເຂົາເປັນເຄື່ອງມືຂອງພຣະວັຈນະນັ້ນ ນັກເທດມີສິ່ງທີ່ຕ້ອງເວົ້າ ແລະຕ້ອງຮູ້ຈັກວ່າຈະເວົ້າແນວໃດ ສິ່ງທີ່ເຂົາຕ້ອງການເວົ້າແມ່ນເປັນພຣະວັຈນະຂອງພຣະເຈົ້າທີ່ສະສົມຢູ່ໃນຕົວເຂົາ ແລະເຂົາຕ້ອງຮູ້ຈັກວ່າພຣະວັຈນະຂອງພຣະເຈົ້າວ່າເປັນແນວໃດ ສິ່ງເຫລົ່ານີ້ຈະເປັນໄປໄດ້ນັ້ນກໍຕໍ່ເມື່ອນັກເທດເປັນຄົນຂອງແຫ່ງພຣະວັຈນະທີ່ສະສົມພຣະວັຈນະຕລອດເວລາ

## **ສາມ. ນັກເທດເປັນຄົນທີ່ມີຄວາມຈົ່ງຮັກພັກດີຕໍ່ພຣະເຈົ້າ**

(The Preacher is a Man Devoted to God)

ໃນເມື່ອນັກເທດເປັນຄົນຂອງພຣະເຈົ້າ ແລະມີພຣະວັຈນະຂອງພຣະເຈົ້າ ເຂົາກໍມີຄວາມຈົ່ງຮັກພັກດີຕໍ່ພຣະເຈົ້າທີ່ສຸດ ເມື່ອໂມເຊໄດ້ຍິນສຽງຮຽກຂອງພຣະເຈົ້າ ໂມເຊກໍມີຄວາມກ້າຫານທີ່ຈະເຂົ້າໄປເຝົ້າຟາໂຣ ເພື່ອນຳພາຊົນຊາດຂອງຕົນທີ່ເປັນທາສຢູ່ພາຍໃຕ້ການບີບບັງຄັບອອກໄປສູ່ອິສຣະພາບ ແລະກັບຄືນສູ່ພຣະເຈົ້າ ຜູ້ຊົງກະທຳພັນທະສັນຍາກັບເຂົາທັງຫລາຍ ຄັ້ງແລ້ວຄັ້ງເລົ່າໂມເຊໄດ້ນຳພວກອິສຣາເອລໃຫ້ຖວາຍຄວາມຈົ່ງຮັກພັກດີແກ່ພຣະເຈົ້າ ແລະພະຍາຍາມສິດສອນເຖິງຄວາມຮັກຂອງພຣະເຈົ້າທີ່ຊົງມີຕໍ່ຊົນຊາດນີ້

ພຣະເຢຊູຄຣິສຊົງສອນສາວົກຂອງພຣະອົງໃຫ້ຖວາຍຄວາມຈົ່ງຮັກພັກດີຕໍ່ພຣະເຈົ້າ ໂດຍຍົກເອົາຂໍ້ພຣະທັມ ຊຶ່ງພຣະເຈົ້າຕັດສັ່ງໄວ້ກັບພວກອິສຣາເອລມາກ່າວເນັ້ນ ໃຫ້ພວກສາວົກຍຶດຖືເປັນພຣະບັນຍັດຖາວອນວ່າ "ຈົ່ງຮັກອົງພຣະຜູ້ເປັນເຈົ້າຂອງເຈົ້າດ້ວຍສຸດໃຈ ດ້ວຍສຸດຈິດ ດ້ວຍສຸດຄວາມຄິດ ແລະດ້ວຍສຸດກຳລັງຂອງເຈົ້າ" (ມກ 12:30) ນັກເທດຜູ້ທີ່ມີຄວາມຈົ່ງຮັກພັກດີຕໍ່ພຣະເຈົ້ານັ້ນ ຍ່ອມພິຈາຣະນາໃນພຣະວັຈນະຂໍ້ນີ້ຂອງພຣະເຢຊູຢ່າງລອບຄອບ ແລະຍຶດໝັ້ນໄວ້ເປັນແນວທາງປະຕິບັດດ້ວຍຄວາມສັດຊື່

## ສີ່. ນັກເທດຕ້ອງເປັນຄຣິສຕຽນ

(The Preacher is a Chirstian)

ຖ້າອາຈານຜູ້ເທສນາບໍ່ເຮັດສິ່ງທີ່ຄຣິສຕຽນສົມຄວນເຮັດ ຫລືເຮັດສິ່ງທີ່ຄຣິສຕຽນບໍ່ສົມຄວນເຮັດ ເຂົາອາດຈະເປັນນັກເທດຢູ່ໄດ້ ແຕ່ເຂົາບໍ່ເປັນນັກເທດທີ່ແທ້ຈິງ ທີ່ຈະເປັນນັກເທດທີ່ແທ້ຈິງຕ້ອງເປັນຄຣິສຕຽນຢູ່ສເມີທັງຈິດໃຈ ການກະທຳ ແລະຄວາມຄິດ ຄວາມເປັນຄຣິສຕຽນຂອງນັກເທດນັ້ນ ຕ້ອງເອົາມາວັດແທກກັບຊີວິດແລະຄວາມເປັນຢູ່ຂອງອົງພຣະເຢຊູຄຣິສເປັນບັນທັດຖານສເມີ

ຄຣິສຕຽນເປັນຄົນທີ່ສຳນຶກຢູ່ໃນໃຈສເມີວ່າຕົນເຄີຍເປັນຄົນຜິດບາບ ການກັບໃຈໃຫມ່ເປັນປະສົບການໃນຊີວິດຂອງເຂົາທີ່ຊັດແຈ້ງຢູ່ສເມີ ເມື່ອຄຣິສຕຽນມີຊີວິດຢູ່ໃນໂລກນີ້ ຈຶ່ງສົມຄວນມີຊີວິດຢູ່ສົມດັ່ງທີ່ທ່ານໂປໂລກ່າວວ່າ "ຖ້າເຮົາມີຊີວິດ ພຣະຄຣິສເປັນຊີວິດນັ້ນ" (ຟປ 1:21) ນັກເທດຕ້ອງພິຈາຣະນາຕົວເອງວ່າ ເປັນຄຣິສຕຽນຫລືບໍ່ ຖ້າເປັນຄຣິສຕຽນແລ້ວ ຄຣິສຕຽນນັ້ນມີຊີວິດຢູ່ເພື່ອພຣະຄຣິສ (ກທ 2:20) ບໍ່ແມ່ນເພື່ອຕົວຂອງເຂົາເອງ ຫລືເພື່ອກຽດສັກສີ ຫລືລາບຍົສຂອງຕົນເອງ

ການເປັນຄຣິສຕຽນເປັນປະສົບການທີ່ຈຳເປັນສຳລັບນັກເທດ ຖ້ານັກເທດຍັງຂາດປະສົບການການບັງເກີດໃຫມ່ ແລະມີຊີວິດໃຫມ່ທີ່ມອບຖວາຍຕົວໃຫ້ເປັນຂອງພຣະເຈົ້າແລ້ວ ເຂົາບໍ່ສາມາດທີ່ຈະກ່າວຄຳເທສນາ ທີ່ເປັນຄວາມຈິງແລະມີຊີວິດຊີວາໄດ້ ເພາະຂາດປະສົບການທີ່ສຳຄັນທີ່ສຸດໃນຊີວິດຂອງເຂົາ ຄຳເທສນາຂອງເຂົາອາດຈະເປັນແຕ່ສິລທັມຊື່ ໆ

## ຫ້າ. ນັກເທດເປັນຄົນ

(The Preacher is Human)

ການທີ່ນັກເທດເປັນຄົນ ກໍເປັນເຣື່ອງທີ່ພວກເຮົາຮູ້ກັນຢູ່ ບໍ່ຫນ້າຈະຕ້ອງການນຳມາກ່າວ ແຕ່ກໍມີນັກເທດຫລາຍຄົນລືມຄວາມເປັນຄົນຂອງຕົນ ຈົນເສັຍຄົນ ຄົນຫລືມະນຸດໃນສາຍຕາຂອງພຣະເຈົ້າຖືວ່າເປັນສິ່ງທີ່ມີຄຸນຄ່າ ຈົນພຣະເຈົ້າໄດ້ຊົງປະທານພຣະບຸດຂອງພຣະອົງໃຫ້ຖືກຳເນີດມາເປັນຄົນ ນັກເທດບໍ່ແມ່ນເທວດາ ແລະໃນເວລາດຽວກັນນັກເທດກໍບໍ່ແມ່ນຫຽັງທີ່ຕ່ຳກວ່າຄົນ ພວກເຮົາຕ່າງຍອມຮັບວ່າທ່ານໂປໂລເປັນນັກເທສທີ່ໂລກຍົກຍ່ອງ ທ່ານເປັນຊາຍຄົນນຶ່ງ ບໍ່ແມ່ນເທວດາທີ່ຈຸຕິມາເປັນມະນຸດ ແຕ່ຊີວິດຂອງທ່ານໂປໂລພິສູດຄວາມເປັນຄົນຂອງທ່ານໃຫ້ເຮົາໄດ້ຮູ້ຈັກ ດັ່ງນີ້

(1) ທ່ານໂປໂລຝັກໃຝ່ໃນສາສນາ ຖວາຍຄວາມຈົງຮັກພັກດີແກ່ພຣະເຈົ້າຢ່າງທີ່ຍອມເອົາຊີວິດເຂົ້າແລກ

(2) ທ່ານໂປໂລເປັນຄົນທີ່ມີຈະຣິຍະທັມ ໄດ້ຮັບການຝຶກໃນໂຮງຮຽນທີ່ເຂັ້ມງວດທາງສາສນາ ຖ້າຈະວັດດ້ວຍໄມ້ບັນທັດແຫ່ງຄວາມຊອບທັມທ່ານກໍບໍ່ມີທີ່ຕິ ແຕ່ເມື່ອພົບກັບພຣະເຢຊູຄຣິສ ກໍເຊື່ອຟັງພຣະອົງ ແລະສາຣະພາບຮັບຜິດທຸກຢ່າງ ບໍ່ແມ່ນເປັນຄົນທີ່ເອົາແຕ່ໃຈຕົນເອງ

(3) ທ່ານໂປໂລເປັນຄົນທີ່ມີຄວາມຮູ້ສູງແລະກວ້າງຂວາງເຂົ້າກັບຄົນທຸກຊັ້ນ ຕັ້ງແຕ່ຄົນສາມັນເຖິງພຣະຣາຊາ

(4) ແມ່ນທ່ານໂປໂລຈະມີຄວາມຮູ້ສູງ ແຕ່ທ່ານກໍມີຄວາມຖ່ອມໃຈປະຈຳຕົວ ບໍ່ໄດ້ຖືວ່າການເຍັບເຕັນຂາຍເປັນງານທີ່ຕ່ຳ

(5) ທ່ານໂປໂລເປັນຄົນຄິດຄົ້ນຄວ້າຢູ່ສເມີ ກ້າທີ່ຈະສເນີຄວາມຄິດເຫັນທີ່ຖືກໂດຍບໍ່ຢ້ານ ຕໍ່ອຸປະສັກ ທ່ານເທສນາດ້ວຍຊີວິດຈິດໃຈຂອງທ່ານ

(6) ທ່ານໂປໂລດຳເນີນຊີວິດຕາມການຊົງນຳຂອງພຣະວິນຍານບໍຣິສຸດ

ຈາກ 6 ປະການ ທີ່ກ່າວມາທ່ານໂປໂລເປັນຄົນເຕັມຕົວ ແລະສົມເປັນແບບຢ່າງໃຫ້ກັບນັກເທດ ໃນປັດຈຸບັນ ໄດ້ເອົາເປັນແບບຢ່າງໄວ້

**ຫົກ. ນັກເທດເປັນນັກຄິດ**

(The Preacher is a Thinker)

ນັກເທດຕ້ອງມີຄວາມເວົ້າທີ່ຊຶມຊາບເຂົ້າໄປໃນຕົວຂອງຜູ້ຟັງ ຄື ຄວາມເວົ້າໃຫ້ຊຶມເຂົ້າໄປໃນຄວາມຮູ້ສຶກຂອງຜູ້ຟັງ ໃຫ້ຖືກຕ້ອງກັບມະໂນທັມຂອງຜູ້ຟັງ ໃຫ້ຖືກຕ້ອງກັບຈິດໃຈຂອງຜູ້ຟັງ ດັ່ງນັ້ນຄຳເທສນາຕ້ອງສະແດງອອກໃຫ້ເຫັນເຖິງຄວາມເຂົ້າໃຈຕາມຕ້ອງການໃນຊີວິດປະຈຳວັນຂອງຜູ້ຟັງ ແລະຄວາມເຂົ້າໃຈເຖິງຄວາມຮູ້ຂອງຜູ້ຟັງດ້ວຍ ເມື່ອມີຄວາມຈຳເປັນທີ່ປາກົດຢູ່ໃນແນວນີ້ ນັກເທດຈຶ່ງຕ້ອງເປັນນັກຄິດທີ່ຢຸດຢູ່ນິ່ງລ້າ ໆ ຢູ່ບ່ອນເກົ່າບໍ່ໄດ້ ເຂົາຕ້ອງເປັນນັກອ່ານເພື່ອເກັບຄວາມຄິດ ແລະພິຈາຣະນາຄວາມຄິດເຫັນຂອງຜູ້ອື່ນ ເພື່ອປູກຝັງຄວາມຄິດເຫັນຂອງຕົນໃຫ້ງອກງາມຂຶ້ນ ເຂົາຕ້ອງສຶກສາຄົ້ນຄວ້າຢູ່ສເມີ ນັກເທດທີ່ດີຕ້ອງມີເວລາສຶກສາດ້ວຍຕົນເອງໃນແຕ່ລະວັນ ແລະໃນເວລາດຽວກັນເຂົາຕ້ອງຮູ້ຈັກຊອກຫາແນວຄິດຈາກຊີວິດ ແລະຄວາມເປັນຢູ່ຂອງຊາວບ້ານດ້ວຍ ເພື່ອແນວຄວາມຄິດທີ່ເຂົາໄດ້ຈາກການສຶກສາຄົ້ນຄວ້າມານັ້ນ ຈະສາມາດນຳມາດັດແປງໃຫ້ເຂົ້າກັບຊີວິດ ແລະຄວາມເປັນຢູ່ຈິງຂອງຊາວບ້ານໄດ້ ສິ່ງເຫລົ່ານີ້ຕ້ອງໃຊ້ເວລາໃນການຄິດ ສັງເກດ ພິຈາຣະນາ ແລະຈົດບັນທຶກເກັບຮັກສາໄວ້ ເພື່ອນຳມາໃຊ້ໃນຍາມທີ່ຕ້ອງການປະກອບເປັນຄຳເທສນາ

9-6-98

= 3:00 PM.

# ບົດທີ 3
# ຄົນຜູ້ຟັງເທສນາ
## The Audience

*ພຣະອົງນັ້ນແຫລະ ທີ່ພວກເຮົາປະກາດ (ເທສນາ) ຢູ່ ໂດຍເຕືອນສະຕິ ແລະສັ່ງສອນທຸກຄົນດ້ວຍປັນຍາທຸກຢ່າງ ເພື່ອຈະໄດ້ຖວາຍທຸກຄົນຕໍ່ພຣະພັກພຣະເຈົ້າ ເຫມືອນເປັນຄົນໃຫຍ່ຖ້ວນແລ້ວໃນພຣະຄຣິສ ເພື່ອການນີ້ແຫລະ ເຮົາຈຶ່ງທົນການ ໜັກຫນ່ວງ ດ້ວຍອົດສາສູ້ ຕາມພຣະກໍາລັງຂອງພຣະອົງຜູ້ຊົງໂຜດກະທໍາດ້ວຍຣິດ ອໍານາດໃນຕົວເຮົາຢູ່ (ໂກໂລຊາຍ 1:28-29)*

ເມື່ອກ່າວເຖິງຄົນຜູ້ເທສນາ ເປັນເຣື່ອງຂອງຄົນ ໆ ດຽວທີ່ຢືນຢູ່ເທິງທັມມາດ ແຕ່ຄົນຫມູ່ໃຫຍ່ທີ່ກ່ຽວຂ້ອງກັບການເທສນາທີ່ຍັງບໍ່ໄດ້ກ່າວເຖິງຄື **"ຄົນຜູ້ຟັງ"** ຖ້າຈະຖິ້ມໄວ້ບໍ່ກ່າວເຖິງເລີຍກໍເບິ່ງຄືກັບວ່າຂາດສ່ວນສໍາຄັນໄປ ເພາະຄົນຜູ້ເທສນາທີ່ເທິງທັມມາດ ເທສນາໃຫ້ຄົນຟັງ ຖ້າບໍ່ມີຄົນຮັບຟັງກໍບໍ່ຈໍາເປັນຕ້ອງເທສນາ ຫລືຖ້າຜູ້ເທສນາບໍ່ໄດ້ຄິດເບິ່ງວ່າ ຄົນທີ່ຟັງຄໍາເທສນານັ້ນແມ່ນຜູ້ໃດ ກໍຄືກັບວ່າເຂົາເທສນາໃຫ້ລົມຟ້າອາກາດຟັງບໍ່ມີຄວາມຫມາຍ ຕົວບຸກຄົນທີ່ເປັນຜູ້ຟັງມີຄວາມສໍາຄັນຫລາຍເພາະວ່າ ເປັນຈຸດມຸ່ງຫມາຍທີ່ລອງຮັບຄໍາເທສນາໃຫ້ເກີດຜົນ ຕາມຈຸດປະສົງແຫ່ງພຣະວັຈນະຂອງພຣະເຈົ້າ ຄືພຣະອົງໃຊ້ຜູ້ເທສນາມາໃຫ້ເວົ້າໃຫ້ຄົນຟັງ ດັ່ງນັ້ນແລ້ວນັກເທດຕ້ອງຮູ້ຈັກຜູ້ຟັງຂອງຕົນວ່າແມ່ນຜູ້ໃດ ເພື່ອຊອກຫາວິທີການແລະຄໍາເວົ້າທີ່ເຫມາະສົມ ທີ່ຈະສື່ສານພຣະວັຈນະໃຫ້ຜູ້ຟັງໄດ້ເຂົ້າໃຈຄັກ ແລະໃຫ້ຜູ້ຟັງສາມາດຂັບຕາມພຣະວັຈນະຂອງພຣະເຈົ້າ

ບາງຄົນອາດຈະກ່າວວ່າຄໍາເທສນາຂອງຕົນ "ເດັກນ້ອຍຟັງໄດ້ຜູ້ໃຫຍ່ຟັງດີ" ເຮັດໃຫ້ເກີດຄວາມສົງສັຍວ່າ ຈະໄດ້ຜົນຫລາຍປານໃດ ທີ່ຄົນທັງສອງຝ່າຍຜູ້ມີວັຍຕ່າງກັນຫລາຍເປັນຜູ້ຮັບຟັງ ເພາະເປັນການຍາກທີ່ຈະໃຫ້ຄໍາເທສນາສໍາເຣັດຕາມຈຸດປະສົງຕາມເປົ້າຫມາຍທີ່ມີຄວາມແຕກຕ່າງເຊັ່ນນີ້ ຄຣິສຈັກທີ່ຈະເຣີນແລ້ວຍ່ອມແບ່ງຜູ້ຟັງອອກເປັນສອງຫລືສາມພວກ ທັງນີ້ຂຶ້ນຢູ່ກັບອົງປະກອບອື່ນ ໆ ດ້ວຍ ຄຣິສຈັກຫລາຍແຫ່ງລວມຍາດພີ່ນ້ອງຢູ່ດ້ວຍກັນ ຄືຜູ້ຟັງມີຕັ້ງແຕ່ເດັກນ້ອຍ ໆ ໄປຈົນເຖິງຜູ້ເຖົ້າກໍນັ່ງຟັງຢູ່ລວມກັນທັງຫມົດ ສະພາບເຊັ່ນນີ້ເປັນເຣື່ອງຫນ້າຫນັກໃຈສໍາລັບນັກເທສທີ່ດີ ເຫດທີ່ຕ້ອງຫນັກໃຈກໍຄືວ່າ ຜູ້ເທສນາຈະເວົ້າໃຫ້ຄົນກຸ່ມໃດຟັງແດ່ ເດັກນ້ອຍ ຊາວຫນຸ່ມຫລືຜູ້ໃຫຍ່ ຄໍາເວົ້າທີ່ຈະໃຊ້ຕ້ອງປຸງແຕ່ງແນວໃດຄົນທັງຫມົດເຖິງຈະເຂົ້າໃຈໄດ້

ຄວາມຈິງອີກປະການນຶ່ງກ່ຽວກັບຜູ້ຟັງ ທຸກຄົນທີ່ **"ຟັງ"** ຄໍາເທສນາຈະ **"ໄດ້ຍິນ"** ຫລືບໍ່ ຄວາມຕ່າງຣະຫວ່າງ **"ຟັງ"** ກັບ **"ໄດ້ຍິນ"** ນັ້ນລາງເທື່ອຕ່າງກັນຫລາຍ ຄົນທີ່ຟັງຄໍາເທສນາລາງເທື່ອອອກພົ້ນປະຕູໂບດ ເຣື່ອງທີ່ຟັງມາທັງຫມົດກໍຫລຸດໄປຈາກຈິດໃຈ ຖິ້ມຢູ່ໃນໂບດນັ້ນເອງ ບໍ່ໄດ້ຕິດຕົວຕິດໃຈກັບເມືອບ້ານ ເມື່ອເປັນແນວນີ້ເປັນສິ່ງສໍາຄັນທີ່ຜູ້ເທສນາຕ້ອງຮຽນຮູ້ຈັກຜູ້ຟັງ ເພື່ອກະຕຸ້ນໃຫ້ຜູ້ຟັງໄດ້ຍິນຄໍາເທສນາ ແລ້ວຮັບຄວາມຈິງແຫ່ງພຣະວັຈນະຂອງພຣະເຈົ້າແລະນໍາຕິດຕົວໄປຂັບຕາມໃນຊີວິດປະຈໍາວັນ

## ນຶ່ງ. ຜູ້ຟັງມີຄວາມເຂົ້າໃຈຄວາມໝາຍທີ່ແຕກຕ່າງກັນກັບຜູ້ເທສນາ
## Audiences Have Different Understanding Than the Preacher

ລາງເທື່ອເມື່ອນັກເທດລົງມາຈາກທັມມາດໄດ້ຮັບຄຳຊີ້ແຈງວ່າ

"ອາຈານ! ນາຍ ກ. ຄຣູດໜ້າດຳໜ້າແດງກັບເມືອບ້ານໄປແລ້ວ"

"ເປັນຫຍັງ!" ອາຈານຖາມດ້ວຍຄວາມສົງສັຍ

"ກໍອາຈານໄປຮ້າຍເຂົາ"

ເຫດແບບນີ້ເກີດຂຶ້ນຫລາຍເທື່ອ ທີ່ອາຈານຜູ້ເທສນາບໍ່ໄດ້ຕັ້ງໃຈ ແຕ່ຜູ້ຟັງມີຄວາມເຂົ້າໃຈຄຳເທສນາໄປຄົນລະແງ່ ເມື່ອເຫດເກີດແບບນີ້ຈະເຫັນໄດ້ວ່າ ສຳລັບຕົວຂອງອາຈານ "ຜົນດີກໍບໍ່ໄດ້ ກັບມາຮັບຜົນຮ້າຍ" ຖ້າອາຈານຄົນນີ້ທຳຄວາມເຂົ້າໃຈກັບນາຍ ກ. ໄດ້ ກໍດີໄປ ຖ້າເຮັດບໍ່ສຳເຣັດກໍຄົງຈະຕ້ອງຊອກຫາ "ວິທີຄືນດີໄປອີກນານ"

ໂດຍທົ່ວໄປ **ຄຳເວົ້າ** ທີ່ເວົ້ານັ້ນມີຄວາມໝາຍແຕກຕ່າງກັນອອກໄປ ເມື່ອນຳໄປໃສ່ໄວ້ໃນປະໂຫຍກທີ່ຕ່າງກັນ ລາງເທື່ອຕ້ອງອາສັຍບົດຄວາມມາຂຍາຍ ຈຶ່ງຈະສາມາດເຂົ້າໃຈຄວາມໝາຍຂອງຄຳນັ້ນໄດ້ຊັດແຈ້ງ ຈຶ່ງສັງເກດຄວາມໝາຍຂອງຄຳວ່າ **"ໃຫຍ່"** ໃນປະໂຍຄຕໍ່ໄປນີ້

ພູເຂົາລູກນີ້**ໃຫຍ່** - ຄຳວ່າ ໃຫຍ່ ຂຍາຍຂນາດຂອງພູເຂົາ
ນ້ອງຮ້ອງໄຫ້**ໃຫຍ່**ແລ້ວ - ຄຳວ່າ ໃຫຍ່ ຂຍາຍຮ້ອງໄຫ້ຂນາດໃດ ປານໃດ
ຢ່າມາທຳ**ໃຫຍ່**ກັບຂ້ອຍ - ຄຳວ່າ ໃຫຍ່ ຂຍາຍກິຣິຍາທ່າທາງ
ທ່ານເປັນຄຣູ**ໃຫຍ່** - ຄຳວ່າ ໃຫຍ່ ຂຍາຍຄຳນາມ ຄຣູ
ພໍ່ຂອງຂ້ອຍແມ່ນຜູ້**ໃຫຍ່**ບ້ານ - ຄຳວ່າ ໃຫຍ່ ບອກໃຫ້ຮູ້ເຖິງຕຳແໜ່ງ

ຄຳວ່າ **"ໃຫຍ່"** ຢູ່ໃນປະໂຍຄເຫລົ່ານີ້ມີຄວາມໝາຍແຕກຕ່າງກັນ ບໍ່ເໝືອນກັນ ທັງຜູ້ເວົ້າແລະຜູ້ຟັງຈຳເປັນຕ້ອງເຂົ້າໃຈຄວາມໝາຍຂອງຄຳເວົ້າກັນມາກ່ອນ ຈຶ່ງຈະເວົ້າເຂົ້າໃຈກັນໃນຄວາມໝາຍຄຳເວົ້າດຽວກັນໄດ້ຢ່າງຖືກຕ້ອງ ພາສາທີ່ໃຊ້ກັນໃນສາສນາຍ່ອມມີຄວາມໝາຍຢ່າງນຶ່ງບໍ່ຄືກັນທີ່ເວົ້າກັນຢ່າງທັມມະດາ ຫລັກທັມຂອງຄຣິສສາສນາກໍບໍ່ຄືກັບຫລັກທັມຂອງພຸດສາສນາ ຄຳເວົ້າຄຳດຽວກັນໃນແຕ່ລະສາສນາອາດມີຄວາມໝາຍຕ່າງກັນກໍໄດ້ ເຊັ່ນຄຳວ່າ "ບາບ" ຕາມຫລັກຄວາມເຊື່ອຂອງຄຣິສຕຽນກໍຕ່າງກັບຫລັກຄວາມເຊື່ອຂອງພຸດ ດັ່ງນັ້ນກ່ອນທີ່ຈະເວົ້າເນື້ອຫາໃຫ້ເກີດຄວາມເລິກຊຶ້ງຈຳເປັນຕ້ອງອະທິບາຍຄວາມໝາຍຂອງຄຳເວົ້າໃຫ້ເຂົ້າໃຈຊັດແຈ້ງເສັຍກ່ອນ ເພື່ອໃຫ້ຜູ້ຟັງຮູ້ຈັກວ່າ ຄຳເວົ້າທີ່ຈະກ່າວຕໍ່ໄປນີ້ໝາຍເຖິງອັນໃດແທ້ ບໍ່ຈຳເປັນຕ້ອງມີການສົມທຽບຫລາຍແບບ ໃຫ້ເກີດຄວາມສັບສົນຕໍ່ຜູ້ຟັງ ເມື່ອກຳໜົດຄວາມໝາຍຂອງຄຳເວົ້າໃຫ້ຖືກຕ້ອງແລ້ວ ຈຶ່ງດຳເນີນເຣື່ອງກ້າວໜ້າຕໍ່ໄປຕາມເຣື່ອງທີ່ເຮົາຈະເວົ້າ

## ສອງ. ຄວາມປະສົງຂອງຜູ້ຟັງ Purpose of the Listener

ຫລັງການປະຊຸມນັກຮຽນໃນໂຮງຮຽນຈົບລົງ ເດັກນັກຮຽນສອງຄົນກໍເວົ້າກັນວ່າ

"ມື້ນີ້ເຈົ້ານັບຄຳວ່າ 'ອື່ນນ່າ' ຂອງນາຍຄຣູໄດ້ຈັກຄຳ"

"ໄດ້ 30 ຄຳ ມື້ນີ້ເພິ່ນທຳລາຍສະຖິຕິ ເວົ້າ 'ອື່ນນ່າ' ຫລາຍກວ່າໝູ່" ເພື່ອນຕອບ

ເຣື່ອງນີ້ສອນໃຫ້ເຫັນໄດ້ວ່າ ຜູ້ຟັງມີຈຸດປະສົງຢ່າງນຶ່ງທີ່ແຕກຕ່າງກັບຈຸດປະສົງຂອງຜູ້ເວົ້າ ຄືເດັກນັກຮຽນມີຈຸດປະສົງຈັບຄຳເວົ້າຜິດຂອງນາຍຄຣູ ແທນທີ່ຈະຟັງຄຳສອນຫລືຄຳອົບຣົມຕາມຈຸດປະສົງຂອງນາຍຄຣູທີ່ຕັ້ງໃຈໄວ້

ແມ່ນວ່າຈະເປັນໝູ່ຄຣິສຕຽນດ້ວຍກັນ ເມື່ອເຂົ້າໄປຟັງຄຳເທສນາ ຜູ້ຟັງຕ່າງຄົນຕ່າງຟັງດ້ວຍອາຣົມ ເຈຕນາ ແລະຈຸດປະສົງທີ່ຕ່າງກັນ ຂໍໃຫ້ເຮົາພິຈາຣະນາເບິ່ງວ່າ ຜູ້ຟັງມີຄວາມຕ່າງກັນເນື່ອງມາຈາກເຫດອັນໃດ ແນວໃດແດ່ ໃນຫົວຂໍ້ຕໍ່ໄປນີ້

### 1. ຜູ້ຟັງຕ່າງຣົສນິຍົມ Audiences Have Different Tastes

ການນມັສການຂອງແຕ່ລະຄຣິສຈັກມີຮູບແບບບັນຍາກາດທີ່ແຕກຕ່າງກັນ ລາງຄຣິສຈັກມັກຄຳເທສນາທີ່ "ເຜັດຮ້ອນ" ຖ້າຟັງຄຳເທສນາທີ່ເປັນ "ແກງຈືດ" ກໍຄົງທົນຟັງຢູ່ໄດ້ ແຕ່ຢາກເບື່ອ ຍ້ອນວ່າມີຣົສຊາດຈືດຈາງໄປ ແຕ່ຜູ້ທີ່ລຶ້ງເຄີຍຕໍ່ແກງຈືດພໍໄດ້ຊີມຣົສ "ແກງເຜັດ" ກໍທົນບໍ່ໄຫວຄືກັນ ສະດຸ້ງຕົກໃຈວ່າຮຸນແຮງໂພດ ຫລືເຈັບຫູ ເມື່ອນັກເທດຈະຕ້ອງໄປເທສນາໃນຕ່າງຖິ່ນ ຈຳເປັນຕ້ອງສອບຖາມໃຫ້ຮູ້ຈັກພໍສົມຄວນ ວ່າຜູ້ຟັງເຫລົ່ານັ້ນມີຣົສນິຍົມຣົສແນວໃດ ຖ້ານັກເທສເປັນສິດຍາພິບາລປະຈຳ ກໍຄວນຊອກຫາໂອກາດຝຶກແອບສະມາຊິກຂອງຕົນໃຫ້ຮູ້ຈັກຟັງຄຳເທສນາທີ່ມີຣົສຕ່າງ ໆ ກັນ ເພື່ອເຂົາຈະບໍ່ຮູ້ສຶກຊ້ຳຊາກ ເບື່ອໜ່າຍ ໃນຣົສຊາດດຽວຕລອດເວລາ

### 2. ຜູ້ຟັງທີ່ມີແຕ່ຄວາມຕັ້ງໃຈນມັສການເທົ່ານັ້ນ Just want to Worship

ຄຣິສຕຽນຈຳນວນຫລາຍທີ່ຖືວ່າວັນອາທິດຕ້ອງໄປຄຣິສຈັກ ເພື່ອນມັສການພຣະເຈົ້າເທົ່ານັ້ນ ແລະນີ້ເປັນຈຸດປະສົງໃຫຍ່ຂອງເຂົາ ຜູ້ໃດຈະເທສນາແນວໃດເຂົາບໍ່ສົນໃຈຫລາຍ ໂດຍຖືວ່າການເທສນາເປັນສ່ວນນຶ່ງຂອງລາຍການ ເບິ່ງດູວ່າຄຣິສຕຽນເຫລົ່ານີ້ເປັນຜູ້ຟັງທີ່ດີ ແຕ່ຈະເປັນຜູ້ທີ່ "ໄດ້ຍິນ" ພຣະວັຈນະຂອງພຣະເຈົ້າຫລືບໍ່ ແລະພຣະວັຈນະເຂົ້າເຖິງຊີວິດຈິດໃຈຫລືບໍ່ ເຂົາອາດພຽງແຕ່ຕ້ອງການປະກອບພິທີທາງສາສນາໃນວັນອາທິດເທົ່ານັ້ນ ຕາມທັມມະດາແລ້ວ ພາກສ່ວນຂອງການເທສນາເປັນພຣະພອນທີ່ພຣະເຈົ້າປະທານໃຫ້ແກ່ຜູ້ເຂົ້າເຝົ້ານມັສການພຣະອົງ ຖ້າຜູ້ໃດຕ້ອງການພຣະພອນຈາກພຣະວັຈນະທັມແຫ່ງຄວາມຈິງຂອງພຣະອົງ ເພື່ອຊີວິດຄຣິສຕຽນທີ່ຈະເຣີນເຕີບໂຕ ກໍສົມຄວນທີ່ຈະມີຄວາມຕັ້ງຈິດຕັ້ງໃຈຮັບຟັງ ຄືກັບຟັງຈາກອົງພຣະຜູ້ເປັນເຈົ້າ ແລະຍອມຮັບຄວາມຈິງດ້ວຍຄວາມເຊື່ອຟັງ ແຕ່ໃນສະພາບຄວາມເປັນຈິງຜູ້ເປັນນັກເທດຕ້ອງຍອມຮັບວ່າບໍ່ແມ່ນທຸກຄົນມີຄວາມຕັ້ງໃຈແນວນັ້ນ ຈຳເປັນທີ່ຜູ້ເທສນາຕ້ອງສ້າງຄວາມສົນໃຈໃນຄຳເທສນາຂອງເຂົາ ເພື່ອດຶງດູດໃຈຂອງຜູ້ຟັງ

### 3. ຜູ້ຟັງທີ່ບໍ່ມີຈຸດປະສົງ Not Recognized Purpose

ມີຄຣິສຕຽນຈຳນວນຫລາຍທີ່ໃຫຍ່ຂຶ້ນໃນຄຣິສຈັກດຽວ ມີຄວາມລຶ້ງເຄີຍໃນບັນຍາກາດຊະນິດດຽວ ຜູ້ສອນໂຮງຮຽນວັນອາທິດຄົນດຽວກັນ ຮ້ອງເພງບົດດຽວກັນ ເມື່ອເຖິງເວລາຟັງເທສນາກໍບໍ່ສົນວ່າ ນັກເທດຈະເປັນແນວໃດ ມີເນື້ອນັຍໜ້າສົນໃຈປານໃດ ກໍຟັງໄປເລື່ອຍ ໆ ໂດຍບໍ່ມີຈຸດປະສົງອັນໃດ ບໍ່ຮູ້ວ່າຈະໄປຮອດໃສ ກໍໄປຕາມກອງປະຊຸມຈະພາໄປ ນັກເທດທີ່ດີຕ້ອງມີຄຳເທສນາຊ່ວຍພາໃຫ້ຜູ້ຟັງຊະນິດນີ້ຫລຸດຈາກການໝຸນວຽນທີ່ມີຢູ່ນັ້ນ

4. ຜູ້ຟັງທີ່ຢາກຮູ້ຢາກເຫັນ Curiosity

ແມ່ນຜູ້ທີ່ພໍຮູ້ຂ່າວວ່າມີນັກເທດໜ້າໃໝ່ຈະມາ ກໍຕື່ນເຕັ້ນຫລາຍ ຢາກຟັງຄາຣົມວ່າເປັນແນວໃດ ເມື່ອໄດ້ຍິນໄດ້ຟັງສິ່ງໃໝ່ ໆ ດ້ວຍ ເຮັດໃຫ້ເປັນທີ່ພໍໃຈ ຜູ້ເທສນາຈະເວົ້າຖືກເຣື້ອງໃນພຣະຄຣິສທັມ ຄັມພີຫລືບໍ່ ກໍບໍ່ສົນໃຈເລີຍ ເພາະບໍ່ຄ່ອຍໄດ້ອ່ານພຣະຄຣິສທັມຄັມພີເປັນປະຈຳຢູ່ແລ້ວ ຢາກໄດ້ຟັງສິ່ງແປກ ໆ ໃໝ່ ໆ ທີ່ຕົນບໍ່ເຄີຍໄດ້ຍິນມາກ່ອນ ກໍນັບວ່າເປັນສິ່ງຊູໃຈໄດ້ເປັນຄັ້ງຄາວ

5. ຜູ້ຟັງທີ່ຕິດເຣື້ອງສ່ວນຕົວ Personal Problems

ສະມາຊິກຜູ້ຟັງທີ່ມານມັສການພຣະເຈົ້າ ຕ່າງຄົນຕ່າງມີເຣື້ອງສ່ວນຕົວຢູ່ໃນຈິດໃຈຂອງເຂົາ ລາງຄົນຟັງເທສນາເພື່ອສະແຫວງຫາຄຳຕອບສຳລັບປັນຫານັ້ນ ຖ້າຄຳເທສນາອັນນັ້ນ ເປັນຄຳຕອບເຣື້ອງສ່ວນຕົວຂອງເຂົາໄດ້ ເຂົາກໍມີຄວາມນັບຖືນັກເທດຄົນນັ້ນເປັນພິເສດ ຫລືລາງເທື່ອຜູ້ຟັງຈະມາຂໍຄຳປຶກສາເມື່ອຈົບຄຳເທສນາ ນັບວ່າເປັນສິ່ງດີທີ່ນັກເທດສາມາດຊູຈິດໃຈຂອງຜູ້ຟັງໄດ້ ແຕ່ຕ້ອງຣະມັດຣະວັງ ເພາະນັກເທດຕ້ອງມຸ່ງເວົ້າກັບຄົນສ່ວນຫລາຍໃນກອງປະຊຸມ <u>ບໍ່ສົມຄວນເຮັດໃຫ້ຄຳເທສນາເປັນເຣື້ອງສ່ວນຕົວສຳລັບຄົນກຸ່ມນ້ອຍ</u> ຢ່າງໃດກໍຕາມນັກເທດຈະອົບໃນເຣື້ອງເຫລົ່ານີ້ຫລາຍບໍ່ໄດ້ ເຂົາຈະຕ້ອງມຸ່ງໜ້າເທສນາຢູ່ໃນພຣະວັຈນະຂອງພຣະເຈົ້າ ດ້ວຍມີຄວາມເຊື່ອວ່າ ພຣະເຈົ້າຈະດົນໃຈຜູ້ຟັງຕາມພຣະປະສົງຂອງພຣະອົງ ແຕ່ນັກເທດຕ້ອງຄິດຈັກໜ່ອຍນຶ່ງວ່າ ຜູ້ຟັງສ່ວນຫລາຍເປັນຄົນຊະນິດໃດ ເພື່ອເຂົາຈະມຸ່ງເວົ້າໃຫ້ກັບຄົນສ່ວນຫລາຍໃນກອງປະຊຸມນັ້ນ ຫລາຍກວ່າທີ່ຈະເວົ້າເປັນເຣື້ອງສ່ວນຕົວຂອງລາງຄົນ

## ສາມ. ຄວາມສົນໃຈຂອງຜູ້ຟັງ Attention of the Listener

ຈະເຮັດແນວໃດທີ່ຜູ້ຟັງຈະມີຄວາມສົນໃຈໃນຄຳເທສນາໄດ້ຕລອດ ທີ່ດົນນານ ອັນນີ້ເປັນຄຳຖາມທີ່ຢູ່ໃນແນວຄວາມຄິດຂອງຜູ້ເທສນາສເມີ ເຮົາຕ້ອງຮູ້ຈັກຫລັກພື້ນຖານວ່າ ສິ່ງໃດທີ່ຊ້ຳຊາກຢູ່ເລີຍ ໆ ໃນຣະຍະເວລາທີ່ຕໍ່ເນື່ອງກັນນານ ກໍເຮັດໃຫ້ຜູ້ຟັງຂາດຄວາມສົນໃຈໄດ້ ຕາມທັມມະດາແລ້ວ ຄົນສາມາດນັ່ງຟັງດ້ວຍຄວາມສົນໃຈ ໄດ້ພຽງ 45 ນາທີແຣກເທົ່ານັ້ນ ຫລັງຈາກນັ້ນຖ້າບໍ່ມີການປ່ຽນບັນຍາກາດແລ້ວ ກໍຈະຂາດຄວາມສົນໃຈ ແລ້ວເກີດຄວາມເບື່ອໜ່າຍ ດັ່ງນັ້ນນັກເທດຈຳເປັນຈະຕ້ອງຫາວິທີຕ່າງ ໆ ທີ່ຈະດຶງດູດຄວາມສົນໃຈຂອງຜູ້ຟັງ ແລະໃນເວລາດຽວຕ້ອງສັງເກດເບິ່ງອົງປະກອບຕ່າງ ໆ ທີ່ເຮັດໃຫ້ຜູ້ຟັງຂາດຄວາມສົນໃຈ ຊຶ່ງມີດັ່ງຕໍ່ໄປນີ້

ສິ່ງທີ່ກ່ຽວຂ້ອງກັບຕົວນັກເທດໂດຍກົງກໍຄື **<u>ສຽງຂອງນັກເທດ</u>** ຖ້າຫາກວ່າເຂົາເທສນາໃຊ້ສຽງໃນຣະດັບດຽວກັນ ບໍ່ມີສູງບໍ່ມີຕ່ຳ ບໍ່ດັງຂຶ້ນເບົາລົງ ເຂົາຈະບໍ່ໄດ້ຮັບຄວາມສົນໃຈຈາກຜູ້ຟັງ ໃຫ້ສັງເກດເບິ່ງວ່າ ເມື່ອເຮົານັ່ງຣົຖໄຟດົນນານແລ້ວ ກໍຈະບໍ່ໄດ້ຍິນສຽງຂອງລໍ້ຣົຖໄຟກະທົບຣາງ ແຕ່ຄວາມຈິງສຽງນັ້ນຍັງຄົງດັງຢູ່ຕາມເດີມ ແຕ່ເຮົາລົດຄວາມສົນໃຈຕໍ່ສຽງຊ້ຳຊາກນັ້ນ ແລ້ວໃຈລອຍໄປສົນໃຈສິ່ງອື່ນແທນ ຖ້າຫາກນັກເທດມີສຽງຣະດັບດຽວກັນໄປເລີຍ ໆ ລາງເທື່ອກໍຊ່ວຍກ່ອມໃຫ້ຜູ້ຟັງນອນຫລັບ ຈຳເປັນຕ້ອງມີສຽງທີ່ປ່ຽນກັນຫລາຍແນວ ສັ້ນແດ່ ຍາວແດ່ ດັງແດ່ ຄ່ອຍແດ່ ເພື່ອຍຶດຄວາມສົນໃຈຂອງຜູ້ຟັງໃນເວລາດຽວກັນກໍຢ່າລືມວ່າ ຖ້ານັກເທດຄົນນຶ່ງເທສນາສຽງດັ່ງສເມີກັນ ຢູ່ຕລອດໄປກໍຈະຊ່ວຍກ່ອມໃຫ້ຜູ້ຟັງຫລັບໄດ້ຄືກັນ ຄືກັບເມື່ອເຮົາໄກວເປ ໄກວໄປມາສເມີກັນຈັກໜ່ອຍນຶ່ງ ເດັກນ້ອຍກໍຫລັບ ຖ້າໄກວຈັງຫວະບໍ່ເທົ່າກັນ ເດັກນ້ອຍຈະນອນຫລັບບໍ່ໄດ້ ຄວາມຈິງນີ້ເປັນພື້ນຖານແນ່ນອນທີ່ນັກເທດຕ້ອງຮູ້ຈັກ

**ສະຖານທີ່** ມີສ່ວນກ່ຽວຂ້ອງກັບຄວາມສົນໃຈຂອງຜູ້ຟັງຄືກັນ ສະຖານທີ່ ໆ ນັ່ງນມັສການຢູ່ນັ້ນ ນັ່ງສະບາຍຫລືບໍ່ ມີສິ່ງອື່ນທີ່ດຶງດູດຄວາມສົນໃຈຂອງຟັງທີ່ຢູ່ໃນທີ່ດຽວກັນນັ້ນຫລືບໍ່ ເມື່ອເບິ່ງດູສະຖານທີ່ນມັສການແລ້ວ ເຫມາະສົມເປັນບ່ອນນມັສການຫລືບໍ່

**ແສງສວ່າງ**ໃນຫ້ອງນມັສການ ມີພຽງພໍຫລືບໍ່ ຫລືສວ່າງຫລາຍໂພດ ຄຣິສຈັກໃຫຍ່ຫລາຍແຫ່ງເຂົາມີການປັບປຸງແປງຄວບຄຸມແສງສວ່າງໃນຫ້ອງໃຫ້ສົມກັບການນມັສການ ສໍາລັບກອງປະຊຸມຂອງເຮົາບາງເທື່ອບໍ່ອາດຈະສາມາດເຮັດໄດ້ ແຕ່ກໍຕ້ອງຮູ້ຈັກສັງເກດຈະຈັດໃຫ້ເຫມາະສົມ ບາງເທື່ອແສງຈາກປ່ອງຢ້ຽມທີ່ສວ່າງເຫລືອມທີ່ສ່ອງໃສ່ຕາຜູ້ຟັງ ກໍຣົບກວນຄວາມສົນໃຈຂອງຜູ້ຟັງໄດ້ຄືກັນ

**ອຸນຫະພູມ** ຮ້ອນໂພດຈົນທົນບໍ່ໄຫວ ຫລືຫນາວຈົນນັ່ງຕົວສັ່ນກໍເຮັດໃຫ້ຜູ້ຟັງສົນໃຈຄໍາເທສນາບໍ່ໄດ້ ເພາະກັງວົນຢູ່ກັບຮ່າງກາຍທີ່ຈະປັບຕົວໃຫ້ເຂົ້າກັບສິ່ງເຫລົ່ານັ້ນ ລາງເທື່ອນັກເທດບໍ່ສາມາດປັບປຸງແປງສິ່ງເຫລົ່ານັ້ນ ເຊັ່ນ ເຄື່ອງປັບອາກາດຕາຍ ຈໍາເປັນຕ້ອງຮູ້ຈັກວ່າຄວາມສົນໃຈຂອງຄົນມີນ້ອຍ ຕ້ອງດໍາເນີນເຣື່ອງໃຫ້ຕົງຈຸດ ແລະຈົບຄໍາເທສນາໄວຂຶ້ນ ນັກເທດບາງທ່ານມີຄວາມຊໍານານກໍອາດສາມາດດຶງຄວາມສົນໃຈຂອງຜູ້ຟັງໃຫ້ຫ່າງໄກອອກໄປຈາກຄວາມຫນາວຄວາມຮ້ອນໄດ້ບ້າງ

## ສີ່. ຄວາມສັມພັນກັບຜູ້ຟັງ Relating to the Audience

ຫ້ອງປະຊຸມຂນາດໃຫຍ່ ມີຄົນນັ່ງຟັງສັກ 20 ຫລື 30 ຄົນ ກະຈັດກະຈາຍໄປ ເຮັດໃຫ້ຂາດຄວາມອົບອຸ່ນ ແລະທໍາລາຍຄວາມສົນໃຈ ເຮັດໃຫ້ຮູ້ສຶກໂດດດ່ຽວ ຖ້າເອົາຄົນ 20 ຫລື 30 ຄົນນັ້ນມານັ່ງໃນຫ້ອງທີ່ນ້ອຍກວ່າ ຈະຊ່ວຍໃຫ້ໄດ້ຄວາມສົນໃຈທີ່ດີຂຶ້ນ ເພາະຕ່າງຄົນຕ່າງໄດ້ຮັບຄວາມສັມພັນແລະບໍ່ຮູ້ສຶກຢູ່ໂດດດ່ຽວ ຄວາມສົນໃຈຂອງຄົນທີ່ຢູ່ໃກ້ຊິດກໍຊ່ວຍຮັກສາຄວາມສົນໃຈໄວ້ໄດ້ດີຍິ່ງຂຶ້ນ

ຫ້ອງປະຊຸມທີ່ມີແຖວຫນ້າວ່າງຢູ່ຫລາຍ ໆ ແຖວ ເຮັດໃຫ້ຜູ້ເທສນາແລະຜູ້ຟັງຫ່າງກັນ ບໍ່ໄດ້ເກີດຄວາມສັມພັນຄືກັນ ນັກເທດຄວນຫາວິທີເຊີນຄົນໃຫ້ຫຍັບເຂົ້າໄປຂ້າງຫນ້າ ກໍຈະເຮັດໃຫ້ຄົນທັງຫ້ອງປະຊຸມເກີດຄວາມສົນໃຈດີຂຶ້ນ ແລະໃຫ້ເຂົາມີຄວາມຮູ້ສຶກວ່ານັກເທດເວົ້າໃຫ້ເຂົາຟັງໂດຍກົງ

ຜູ້ເທສນາກັບຜູ້ຟັງຄວນມີຄວາມສັມພັນໃກ້ຊິດກັນ ຖ້າເອົາຜູ້ເທສນາໄປແອບໄວ້ ເທສນາໂດຍບໍ່ເຫັນຫນ້າເຫັນຕາ ຄໍາເທສນາຈະມີຄຸນຄ່ານ້ອຍລົງ ເພາະຜູ້ຟັງຈະບໍ່ມີຄວາມສັມພັນວ່າ ຜູ້ເທສນາກໍາລັງເວົ້າກັບເຂົາ ການຮ້ອງເພງຮ່ວມກັນ ຫລືການອ່ານບົດພຣະທັມສະລັບກັນ ເປັນວິທີການທີ່ຊັກນໍາໃຫ້ຜູ້ຟັງມີຄວາມຮູ້ສຶກທີ່ສັມພັນ ເຮົາຈະໃຊ້ສິ່ງເຫລົ່ານີ້ນໍາຫນ້າການເທສນາໄດ້

## ຫ້າ. ຊະນິດຂອງຜູ້ຟັງ Different Kinds of Listeners

ຖ້າເຮົາຈະຈັດຜູ້ຟັງເປັນຊະນິດຕ່າງ ໆ ຢ່າງຖືກຕ້ອງນັ້ນບໍ່ໄດ້ ເພາະບໍ່ມີກົດເກນອັນໃດທີ່ຈະວັດແທກຈິດໃຈຂອງຜູ້ຟັງໄດ້ຖືກຕ້ອງ ແຕ່ເຮົາສາມາດຈັດແບ່ງຜູ້ຟັງອອກເປັນຊະນິດໃຫຍ່ໄດ້ດັ່ງນີ້

1\. **ຄົນເດີນທຸນົນ** ແມ່ນຫມູ່ຄົນທີ່ໄດ້ຟັງຄໍາເທສນາທີ່ມາຈາກໃສລາງເທື່ອເຮົາກໍບໍ່ຮູ້ຈັກລັກ ເພາະບໍ່ມີເວລາສອບຖາມປະວັດ ເຮົາອາດເຫັນເຂົາຢູ່ຕາມຖນົນ ຫລືຕາມຕລາດສົດ ອ້ອມເຂົ້າມາຟັງ

ການປ່າວປະກາດຂ່າວປະເສີດແລ້ວກໍແຍກກັນໄປ ເຂົ້າ ໆ ອອກ ໆ ລາງເທື່ອກໍຫລາຍລາງ ເທື່ອກໍນ້ອຍ ບໍ່ແນ່ນອນ

**2. ຄົນປະເພດດຽວກັນ** ແມ່ນອາດຈະເປັນຄະນະຊາວໜຸ່ມ ຄະນະສຕຣີ ຄົນເຈັບໃນໂຮງໝໍທີ່ນັກເທສນາໄປເທດເປັນຄັ້ງຄາວ ການເທສນາໃຫ້ຄົນທີ່ເປັນພວກດຽວກັນນີ້ ນັກເທດມີໂອກາສຈັດຄໍາເທສນາໃຫ້ເຫມາະສົມຫລາຍກວ່າ ພວກແຮກ

**3. ຄົນທີ່ເຊີນມາ** ອາດຈະເປັນຊາວສວນ ກັມມະກອນ ຊາວນາ ທະຫານ ຄົນພວກນີ້ຖືກເຊີນມາໂດຍສະເພາະໃຫ້ຟັງເທສນາເປັນຄັ້ງຄາວຄືກັບພວກທີ 2 ແຕ່ບໍ່ຄືກັນເພາະຣະດັບຄວາມຮູ້ໃນກຸ່ມນີ້ອາດຈະແຕກຕ່າງກັນກໍໄດ້ ແຕ່ຢ່າງໃດກໍຕາມກໍມີບາງຢ່າງທີ່ຄືກັນ ຄືເປັນພວກທີ່ເຮົາໄດ້ເລືອກເຊີນເຂົ້າມາ

**4. ຄົນທີ່ໄດ້ຝຶກໄວ້ແລ້ວ** ແມ່ນສະມາຊິກໃນຄຣິສຈັກ ທີ່ໄດ້ຮັບການຝຶກແອບໃຫ້ຟັງຄໍາເທສນາໄວ້ແລ້ວ ຜູ້ຟັງພວກນີ້ຈະມີຄວາມສົນໃຈ ແລະໃຫ້ຄວາມຮ່ວມມືໄດ້ດີກວ່າໝູ່

ການແບ່ງແຍກຊະນິດຂອງຜູ້ຟັງບໍ່ມີຫລັກການຫຍັງທີ່ຍຶດຖື ແຕ່ກໍເປັນສິ່ງທີເປັນປໂຍດ ເພາະຄົນແຕ່ລະພວກນັ້ນຕ້ອງການຄໍາເທສນາທີ່ຕ່າງກັນ ນັກເທດຈໍາເປັນຕ້ອງຮຽນຮູ້ຈິດຕະວິທຍາ ເພື່ອຈະຮູ້ຈັກຈິດໃຈຂອງຄົນຊະນິດຕ່າງ ໆ ໄວ້ ເພື່ອເປັນເຄື່ອງຊ່ວຍການຕຽມຄໍາເທສນາໃຫ້ດີຂຶ້ນ ດັ່ງນັ້ນຜູ້ຟັງຄໍາເທສນາຈຶ່ງມີສ່ວນສໍາຄັນ ທີ່ຜູ້ຕຽມຄໍາເທສນາຕ້ອງຣະລຶກເຖິງ ຄືກັບແມ່ຄົວ ຕ້ອງຮູ້ວ່າຈະເຮັດອາຫານໃຫ້ໃຜຮັບປະທານ ອາຫານສໍາລັບຄົນປ່າຍກໍແບບນຶ່ງ ອາຫານສໍາລັບເດັກນ້ອຍກໍແບບນຶ່ງ ອາຫານສໍາລັບຜູ້ເຖົ້າກໍແບບນຶ່ງ ຍ່ອມບໍ່ຄືກັນ ການທີ່ຈະເທສນາໃຫ້ຄົນຣິມຖນົນຟັງ ກໍຕ່າງກັບເທສນາໃຫ້ນັກສຶກສາໂຮງຮຽນພຣະຄຣິສທັມຟັງ ຈະໃຊ້ຄໍາເທສນາອັນດຽວກັນບໍ່ໄດ້ ຄົນຜູ້ຟັງແຕ່ລະຊະນິດມີຄວາມຕ່າງກັນ ໃຫ້ເຮົາສັງເກດຮຽນຮູ້ເບິ່ງຈາກຮູບພາບໃນໜ້າຕໍ່ໄປ

# ຜູ້ຟັງແຕ່ລະຄົນມີຄວາມແຕກຕ່າງກັນ ໃນ...

... ດ້ານອາຍຸ



... ດ້ານປະສົບການທີ່ຕ່າງກັນ



... ດ້ານບຸຄລິກລັກສະນະຕ່າງກັນ



... ດ້ານຣິສນິຍົມຕ່າງກັນ




... ຄວາມສາມາດດ້ານການຮຽນຕ່າງກັນ




... ດ້ານຄວາມສາມາດຕ່າງກັນ



# ບົດທີ 4
# ການຊອກຫາເລື່ອງທີ່ຈະເທສນາ
## Dicovering the Idea of the Sermon

> ຈົ່ງອົດສາພາຍາຍາມສະແດງຕົນ ເຫມືອນເປັນຄົນທີ່ພິສູດແລ້ວຕໍ່ພຣະພັກ
> ພຣະເຈົ້າ ເປັນຄົນງານທີ່ບໍ່ຕ້ອງອາຍແລະໃຊ້ພຣະທັມແຫ່ງຄວາມຈິງຢ່າງຖືກຕ້ອງ
> (2 ຕີໂມທຽວ 2:15)

ຫລັກການທີ່ສຳຄັນທີ່ສຸດໃນການຊອກຫາເລື່ອງທີ່ຈະເທສນາຄື ການເຂົ້າເຝົ້າພຣະເຈົ້າດ້ວຍການອ້ອນວອນ ເຮົາຕ້ອງບໍ່ລືມວ່າ ນັກເທດເປັນກະບອກສຽງທີ່ພຣະເຈົ້າໃຊ້ຕິດຜ່ານ ດັ່ງນັ້ນແຫລ່ງສຳຄັນທີ່ຈະໄດ້ຄຳເທສນາມານັ້ນແມ່ນພຣະເຈົ້າ ຫລັກຄວາມຈິງນີ້ເປັນພື້ນຖານເບື້ອງຕົ້ນທີ່ຕ້ອງພິຈາຣະນາຢູ່ຕລອດເວລາໃນຂບວນການຕຽມການເທສນາ ຈະເປັນຂັ້ນຕຽມຄຳເທສນາ ຮວບຮວມຄຳເທສນາ ຫລືແມ່ນການດຳເນີນການເທສນາ ການອ້ອນວອນເປັນກະແຈເພື່ອຊ່ວຍໃຫ້ນັກເທດສຳນຶກຕລອດເວລາວ່າສິ່ງທີ່ເຮົາກຳລັງດຳເນີນການຢູ່ນີ້ ເພື່ອພຣະເຈົ້າ ຕ້ອງອາສັຍການນຳພາຂອງພຣະອົງ

ການນຳພາຂອງພຣະເຈົ້າອາດຈະເລີ່ມຕົ້ນຈາກເຄົ້າເລື່ອງທີ່ປາກົດຂຶ້ນໃນຈິດໃຈ ເຄົ້າເລື່ອງນີ້ເປັນຄວາມຈິງທີ່ເລິກຊຶ້ງແລະສາມາດນຳຄວາມຈິງນັ້ນໄປກ່ຽວຂ້ອງກັບຊີວິດໄດ້ ເຄົ້າເລື່ອງນີ້ຈະເປັນມູລຮາກຖານຂອງຄຳເທສນາ ແລ້ວພັທນາຂຶ້ນຈົນເປັນຄຳເທສນາທີ່ສົມບູນ

### ນຶ່ງ. ແຫລ່ງທີ່ມາຂອງເຄົ້າເລື່ອງໃນການເທສນາ
### Sources of the Idea of the Sermon

#### ກ. ຈາກການດົນໃຈຈາກພຣະເຈົ້າ From the Inspiration of God

ບາງຄັ້ງພຣະເຈົ້າເຮັດການໃນຕົວຂອງຜູ້ຮັບໃຊ້ຂອງພຣະອົງໂດຍການດົນໃຈ ເປັນເຄົ້າເລື່ອງທີ່ເກີດຂຶ້ນໂດຍນັກເທດບໍ່ທັນໄດ້ຕຽມຕົວມາກ່ອນ ການດົນໃຈຂອງພຣະເຈົ້າແບບນີ້ຈະເກີດຂຶ້ນເມື່ອໃດບໍ່ມີຜູ້ໃດຈະຮູ້ຈັກ ແລະອາດເກີດຂຶ້ນໃນສະຖານະການໃດກໍໄດ້ ເປັນຜົນການນຳພາຂອງພຣະວິນຍານບໍຣິສຸດ ໃນທີ່ນີ້ບໍ່ໄດ້ມີຄວາມຫມາຍໃນລັກສະນະ "ເຂົ້າຊົງ" ຄືກັບຄົນຖືຜີ ແຕ່ເປັນການສຳແດງຂອງພຣະວິນຍານບໍຣິສຸດ ທີ່ໃຫ້ຄວາມຈິງປາກົດແກ່ນັກເທດ ໂດຍໃຊ້ພຣະວັຈນະຂອງພຣະເຈົ້າເປັນຫລັກຄວາມຈິງ ທີ່ນຳໃຫ້ເກີດຄວາມຮອດພົ້ນໃນພຣະເຢຊູຄຣິສ ຫລືຊ່ວຍໃຫ້ຄຣິສຕຽນໄດ້ໃຫຍ່ຂຶ້ນໄປສູ່ຄວາມສົມບູນໃນພຣະຄຣິສ ເປັນຄວາມຈິງທີ່ນຳໃຫ້ເກີດການເສີມສ້າງຄຣິສຈັກຂອງພຣະອົງ ມີປະສົບການຫລາຍເທື່ອທີ່ນັກເທດເອງພົບວ່າ ຄວາມຄິດທີ່ເກີດຂຶ້ນໂດຍການຊົງນຳຂອງພຣະເຈົ້າ ໄດ້ນຳພຣະພອນມາສູ່ຜູ້ຟັງຫລາຍທີ່ສຸດ

## ໒. ຈາກຂໍ້ພຣະຄັມພີ From the Bible

ພຣະຄຣິສທັມຄັມພີເປັນບັນທຶກການເປີດເຜີຍຂອງພຣະເຈົ້າຕໍ່ມະນຸດ ເປັນເຣື່ອງຣາວຂອງການພົບພໍ້ກັນຣະຫວ່າງມະນຸດກັບພຣະເຈົ້າໃນປະສົບການຕົວຈິງຂອງຊີວິດ ພຣະຄຣິສທັມຄັມພີມີຄຳຕອບທີ່ສາມາດຕອບສນອງຄວາມຕ້ອງການຂອງມະນຸດໃນທຸກວັນນີ້ໄດ້ ເຊັ່ນດຽວກັບໃນອາດີດ ວິທີທີ່ນັກເທດນຳຂໍ້ພຣະຄັມພີທີ່ຈະມາເທສນາ ມາສ້າງເປັນໂຄງຮ່າງຂອງຄຳເທສນາ ໂດຍອາສັຍການຕີຄວາມຫມາຍຂອງນັກເທດໃນການຈັດໂຄງເຣື່ອງ ແຕ່ມີຄຳຖາມທີ່ຕິດຕາມມາກໍຄື ຈະໃຊ້ວິທີໃດແລະຫລັກການໃດໃນການຄົ້ນຫາຂໍ້ພຣະຄັມພີມາເທສນາ

## ສອງ. ວິທີການຄົ້ນຫາຂໍ້ພຣະຄັມພີ (Text) ທີ່ຈະໃຊ້ເທສນາ
## The Methods of Finding Text

ການຄົ້ນຫາຂໍ້ຄວາມຫລືຂໍ້ພຣະຄັມພີເປັນສິ່ງທີ່ສຳຄັນ ແລະຫນ້າຕື່ນເຕັ້ນທີ່ສຸດຂອງນັກເທດຫລາຍຄັ້ງທີ່ດຽວ ທີ່ມີຂໍ້ພຣະຄັມພີເຂົ້າມາຈັບຂ້ອຫົວໃຈ ອາດຈະເປັນຂໍ້ທີ່ເຮົາເຄີຍຈື່ຈຳ ຫລືເຄີຍມີປະສົບການໃນຊີວິດກັບຂໍ້ພຣະຄັມພີນັ້ນ ຂໍ້ພຣະຄັມພີນັ້ນນຳໃຫ້ເຮົາເກີດການພິຈາຣະນາ ແລະນຳມາພາວະນາພິຈາຣະນາກັບພຣະເຈົ້າ ຈົນເກີດຄວາມສວ່າງຊັດແຈ້ງໃນການສຳແດງຂອງພຣະເຈົ້າ ທີ່ຈະເປີດເຜີຍໃຫ້ກັບຜູ້ຟັງ

ແຕ່ການນຳພາຂອງພຣະເຈົ້າກໍມີຫລາຍກວ່າວິທີທີ່ໄດ້ກ່າວໄປແລ້ວ ຫລາຍຄັ້ງທີ່ນັກເທດຕ້ອງຄົ້ນຫາຂໍ້ພຣະຄັມພີເພື່ອຈະເທສນາຈາກພຣະຄັມພີໂດຍຕົງ ໂດຍທີ່ອາສັຍວ່ານັກເທດຮູ້ຈັກຄວາມຕ້ອງການຂອງສະມາຊິກທີ່ເຂົາຮັບໃຊ້ຢູ່ແລ້ວ ແລ້ວເຂົາກໍຄົ້ນຫາຂໍ້ພຣະຄັມພີ ທີ່ມີຄວາມຈິງກ່ຽວຂ້ອງກັບຊີວິດຂອງສະມາຊິກເຫລົ່ານັ້ນ ຈຸດສຳຄັນໃນຫລັກການນີ້ມີຢູ່ສິ່ງນຶ່ງຄື ເຮົາຄວນຫາຂໍ້ພຣະຄັມພີທີ່ຊ່ວຍຫລືຮັກສາຊີວິດຈິດໃຈຂອງຜູ້ທີ່ອ່ອນກຳລັງກັບການດຳເນີນຊີວິດໃນໂລກ ໃຫ້ເຂັ້ມແຂງຂຶ້ນຫລາຍກວ່າທີ່ຈະເອົາຂໍ້ພຣະຄັມພີໄປຕຳເຂົາໃຫ້ລົ້ມ ຖ້າເປັນການເປີດເຜີຍຊີ້ແຈງເຖິງສິ່ງທີ່ບໍ່ຖືກຕ້ອງແລະບໍ່ພໍພຣະທັຍພຣະເຈົ້າ ກໍສົມຄວນທີ່ຈະຕ້ອງແນະນຳຫົນທາງແຫ່ງການກັບໃຈເສັຍໃຫມ່ ເພື່ອໃຫ້ເຂົາຮູ້ຈັກວ່າຫົນທາງທີ່ຖືກຕ້ອງກັບພຣະເຈົ້າເປັນແນວໃດ

## ສາມ. ຫລັກການໃນການພິຈາຣະນາເລືອກສັນພຣະຄັມພີທີ່ຈະໃຊ້ເທສນາມີດັ່ງຕໍ່ໄປນີ້
## The Principles for Using the Text

1. ນັກເທດຄວນພິຈາຣະນາເບິ່ງຜູ້ຟັງໃນກອງປະຊຸມໂດຍສ່ວນລວມ ວ່າສະພາບຈິດວິນຍານຂອງເຂົາຢູ່ຣະດັບໃດ ກອງປະຊຸມລາງແຫ່ງມີສະພາບຈິດວິນຍານທີ່ຍັງບໍ່ໄດ້ຈະເຣີນເຕີບໂຕ ແລະບໍ່ພ້ອມທີ່ຈະຟັງເທສຄຳສອນທີ່ຫນັກ ດັ່ງນັ້ນເນື້ອຫາທີ່ໃຊ້ແລະຄວາມຈິງໃນພຣະວັຈນະທີ່ຈະຖ່າຍທອດຈະຕ້ອງເຫມາະສົມໃນສະພາບທີ່ເຂົາຈະຮັບໄດ້ ແລະນຳໃຫ້ເຂົາຈະເຣີນຂຶ້ນສູ່ອີກຣະດັບນຶ່ງ

2. ຂໍ້ພຣະຄັມພີທີ່ຈະໃຊ້ເທສນາຕ້ອງເປັນຫນ່ວຍຄວາມຄິດທີ່ສົມບູນ ການຍົກຂໍ້ພຣະຄັມພີມາຂໍ້ດຽວໂດດ ໆ ໂດຍບໍ່ໄດ້ພິຈາຣະນາຂໍ້ພຣະຄັມພີທີ່ຢູ່ຂ້າງຫນ້າຂ້າງຫລັງ ບາງເທື່ອອາດຈະເຮັດໃຫ້ໄດ້ຄວາມຫມາຍທີ່ບໍ່ສົມບູນ ຜູ້ຕຽມເທສຄວນອ່ານພຣະຄັມພີໃຫ້ຫມົດທັງຕອນຫລືທັງບົດ ພ້ອມກັບພິຈາຣະນາດູເນື້ອຄວາມແວດລ້ອມ ແລະສລູບເອົາຄວາມຈິງອອກມາ ຄວາມຈິງທີ່ໄດ້ນັ້ນຕ້ອງເປັນຄວາມຈິງທີ່ບໍ່ຕາຍທີ່ເປັນຈິງໃນທຸກຍຸກທຸກສະໄຫມ

3. ຂໍ້ພຣະຄັມພີທີ່ໃຊ້ເທສນາຄວນຊັດແຈ້ງ ແລະງ່າຍຕໍ່ອະທິບາຍໃຫ້ເຂົ້າໃຈ ເປັນຂໍ້ພຣະຄັມພີທີ່ພ້ອມທີ່ເປີດເຜີຍຄວາມຫມາຍອອກມາໃຫ້ຊັດແຈ້ງໄດ້

4. ນັກເທດຄວນຈະເລືອກຂໍ້ພຣະຄັມພີທີ່ຕົນເອງເຄີຍໄດ້ສຶກສາມາກ່ອນແລະຮູ້ຈັກເຂົ້າໃຈດີ

5. ໃນບາງໂອກາສນັກເທສຄວນຈະເລືອກຂໍ້ພຣະຄັມພີຕອນໃຫມ່ ໃຫ້ມີຄວາມແຕກຕ່າງກັບຂໍ້ພຣະຄັມພີທີ່ຕົນໃຊ້ຢູ່ສເມີ ຖ້າຫາກບໍ່ມີພຣະຄັມພີຕອນໃຫມ່ມາສເນີ ກໍຄວນຈະຮູ້ຕົວວ່າຕົນເອງມີຈິດວິນຍານຕົກຕໍ່າ ເພາະຕົວເອງບໍ່ໄດ້ຮຽນຮູ້ສິ່ງໃຫມ່ຈາກພຣະວັຈນະຂອງພຣະເຈົ້າ ດັ່ງນັ້ນຄວນຈະໃຊ້ເວລາເຂົ້າເຝົ້າແລະສຶກສາພຣະຄັມພີເຕີມ

6. ການເລືອກຂໍ້ພຣະຄັມພີຄວນຈະເລືອກຫລາຍ ໆ ແບບ ພາກສ່ວນທີ່ຕ່າງ ໆ ກັນ ນັກເທສນາບາງຄົນມັກເທສນາແຕ່ພຣະຄັມພີໃຫມ່ເທົ່ານັ້ນ ແລະດູເຫມືອນໄດ້ປະຖິ້ມພຣະຄັມພີເດີມເສັຍ ຈະແກ້ໄຂບັນຫານີ້ໄດ້ໂດຍການວາງແຜນການເທສນາ ແລະຈັດການເທສນາແຕ່ລະອາທິດໃຫ້ສົມດຸລກັນ

## ສີ່. ການວາງແຜນການເທສນາ

Planning of the Sermon

ຜູ້ເທສນາຄວນຈະວາງແຜນການສໍາລັບການເທສນາໄວ້ລ່ວງຫນ້ານຶ່ງປີ ແຕ່ກໍມີນັກເທດຈໍານວນບໍ່ນ້ອຍ ມັກທີ່ຈະຕຽມການເທສນາລ່ວງຫນ້າຣະຍະສັ້ນ ເຊັ່ນ 3 ເດືອນ ຫລືນຶ່ງເດືອນ ດ້ວຍການອະທິຖານຂອງການຊົງນໍາຈາກພຣະເຈົ້າ

**ຄວາມຈໍາເປັນໃນການວາງແຜນການເທສນາລ່ວງຫນ້າ**

1. ການວາງແຜນການເທສນາໄວ້ ສາມາດຕຽມການໄວ້ລ່ວງຫນ້າ ໂດຍບໍ່ຕ້ອງຮີບຮ້ອນໃນແຕ່ລະອາທິດ ຊຶ່ງລາງເທື່ອນັກເທດມີພາຣະຫນ້າທີ່ຫລາຍຈົນບໍ່ໄດ້ຄິດຢ່າງລຶກຊຶ້ງ
2. ການວາງແຜນການເທສນາໄວ້ລ່ວງຫນ້າເຮັດໃຫ້ນັກເທດມີເວລາຕຽມຕົວ ແລະສຶກສາຄົ້ນຄວ້າຄໍາເທສນາຫລາຍຂຶ້ນ ແລະມີເວລາພຽງພໍທີ່ພິຈາຣະນາທັມກັບພຣະເຈົ້າ
3. ການວາງແຜນການເທສນາໄວ້ລ່ວງຫນ້າ ເຮັດໃຫ້ນັກເທດມີເວລາໃນການຄົ້ນຄວ້າ ແລະຮວບຮວມຂໍ້ມູລຈາກແຫລ່ງຕ່າງ ໆ ນອກເຫນືອຈາກພຣະຄັມພີ
4. ການວາງແຜນການເທສນາໄວ້ລ່ວງຫນ້າ ເຮັດໃຫ້ນັກເທດສາມາດຈັດຫົວຂໍ້ເທສນາດ້ານຕ່າງ ໆ ຢ່າງກວ້າງຂວາງໂດຍທົ່ວເຖິງ ແລະມີຫົວຂໍ້ຄອບກຸມກັບຄວາມຕ້ອງການດ້ານຕ່າງ ໆ ຂອງສະມາຊິກ
5. ການວາງແຜນການເທສນາໄວ້ລ່ວງຫນ້າ ເຮັດໃຫ້ນັກເທດສາມາດຈັດລາຍການນມັສການໃຫ້ສອດຄ້ອງກັບຫົວຂໍ້ເທສນາ

# ບົດທີ 5
# ຄຳເທສນາ
# The Sermon

*ເຖິງແມ່ນຂ້າພະເຈົ້າ (ໂປໂລ) ເປັນຜູ້ນ້ອຍກວ່າຜູ້ນ້ອຍທີ່ສຸດໃນພວກໄພ່ພົນ ທັງຫມົດຂອງພຣະເຈົ້າ ກໍຊົງໂຜດປະທານພຣະຄຸນນີ້ແກ່ຂ້າພະເຈົ້າ ຄື ໃຫ້ຂ້າພະ ເຈົ້າປະກາດຂ່າວປະເສີດແກ່ຄົນຕ່າງຊາດ ເຖິງເຣື່ອງຄວາມບໍຣິບູນອັນຫາທີ່ປຽບ ບໍ່ໄດ້ຂອງອົງພຣະຄຣິສ (ເອເຟໂຊ 3:8)*

ຄຳເທສນາເປັນຄຳເວົ້າທີ່ກ່າວອະທິບາຍຄວາມໂດຍຍົກເອົາເຫດຜົນ ຫລືຍົກເອົາຫລັກຖານຈາກພຣະວັຈະນະຂອງພຣະເຈົ້າມາປະກອບ ຕາມຂນາດຄວາມຍາກງ່າຍ ຄວາມເຫມາະສົມກັບຣະດັບຄວາມຮູ້ຄວາມເຂົ້າໃຈຂອງຜູ້ຟັງ ດ້ວຍເຈຕນາໃຫ້ຜູ້ຟັງເກີດຄວາມເຊື່ອສັດທາ ແລະປະຕິບັດຕາມ ຫລືເກີດຄວາມເຊື່ອຖື ແລະໄວ້ວາງໃຈໃນອົງພຣະຜູ້ເປັນເຈົ້າ

ຄຳເທສນາທີ່ດີແທ້ນັ້ນ ຕ້ອງມີເນື້ອຫາຂອງພຣະຄຣິສທັມຄັມພີ ທັງນີ້ບໍ່ໄດ້ຫມາຍຄວາມວ່າຕ້ອງຍົກເອົາພຣະຄຣິສທັມຄັມພີມາອ້າງອີງເຕັມໄປຫມົດ ແຕ່ຫມາຍຄວາມວ່າເນື້ອຫາຂອງຄຳເທສນານັ້ນ ເປັນເນື້ອຫາຕາມຫລັກທັມຄຳສອນຂອງພຣະຄຣິສທັມຄັມພີ ເພື່ອເປັນຂ່າວດີໃຫ້ແກ່ຜູ້ຟັງ ໄດ້ຮັບຄວາມຣອດພົ້ນທາງພຣະເຢຊູຄຣິສ ແລະເກີດຊີວິດໃຫມ່ໃນຝ່າຍຈິດວິນຍານໂດຍພຣະວິນຍານບໍຣິສຸດ ຂ່າວດີນີ້ໃຫ້ຄວາມຫວັງໃຈໃຫມ່ ສຳລັບທ້ອງຟ້າໃຫມ່ທີ່ຈະມາໃນອານາຄົດ ໂດຍການສະເດັດຄືນມາເທື່ອທີ່ສອງຂອງພຣະເຢຊູຄຣິສ ຜູ້ທີ່ເຊື່ອແລະໄວ້ວາງໃຈກໍຈະມີສ່ວນຮ່ວມໃນແຜ່ນດິນຂອງພຣະອົງ

ຄຳເທສນາຄວນເປັນຄຳທີ່ອອກຈາກຊີວິດນຶ່ງໄປສູ່ອີກຊີວິດນຶ່ງ ຄືເປັນເຣື້ອງຂອງຊີວິດທີ່ໄດ້ຮັບປະສົບການໄປ ສູ່ຊີວິດທີ່ຍັງບໍ່ໄດ້ຮັບປະສົບການ ເພື່ອໃຫ້ເຂົາໄດ້ພັທນາຊີວິດໃຫ້ໃຫຍ່ຂຶ້ນຈົນເຖິງຈຸດຫມາຍປາຍທາງຕາມພຣະປະສົງຂອງພຣະເຈົ້າ

ຄຳເທສນາຄວນເປັນເຣື້ອງທີ່ຟັງແລ້ວປະຕິບັດກັນໄດ້ ຫລືເປັນຄວາມຮູ້ທີ່ຈະໃຫ້ຊີວິດມະນຸດຈະເຣີນກ້າວຫນ້າ ໄປສູ່ຄວາມເປັນນຶ່ງອັນດຽວກັນກັບພຣະເຈົ້າ

## ນຶ່ງ. ສ່ວນຕ່າງ ໆ ຂອງໂຄງສ້າງຄຳເທສນາ Structure of the Sermon

### ກ. ການຈັດໂຄງຮ່າງຄຳເທສນາ Make an Outline

ຄຳເທສນາທີ່ຖືກຈັດວາງໃຫ້ເປັນຣະບຽບຮຽບຮ້ອຍຕາມຫລັກດ້ວຍເຫດຜົນ ຍ່ອມເຮັດໃຫ້ຜູ້ເວົ້າເວົ້າໄດ້ງ່າຍ ແລະຜູ້ຟັງຈັບຄວາມຫມາຍໄດ້ສະດວກ ໃຫ້ຜົນປໂຍດທັງສອງຝ່າຍທັງນັກເທດແລະຜູ້ຟັກ ເຮັດໃຫ້ນັກເທດທຸກຄົນມີຄວາມຄິດທີ່ດີ ແຕ່ກໍມີນັກເທດລາງທ່ານບໍ່ມີຄວາມເຂົ້າໃຈໃນການຈັດຄຳເວົ້າ ຄວາມຄິດທີ່ດີກໍເສື່ອມຄ່າໄປເພາະ

ຖ່າຍທອດອອກໃຫ້ຜູ້ອື່ນບໍ່ໄດ້ ເປັນເຫດໃຫ້ຜູ້ຟັງຈັບຄວາມເວົ້າຂອງນັກເທດບໍ່ໄດ້ຖະນັດ ເລີຍເກັບເອົາຄວາມຄິດທີ່ດີນັ້ນໄວ້ບໍ່ໄດ້ ດັ່ງນັ້ນການຈັດຄຳເທສນາຢ່າງມີຣະບຽບຈຶ່ງເປັນຫລັກພື້ນຖານຂອງການຕຽມຄຳເທສນາ ທີ່ຜູ້ເທສນາຕ້ອງຄິດເຖິງສເມີ

ຄຳເທສນາຈະເກີດຣະບຽບໄດ້ຈະຕ້ອງມີການວາງໂຄງຮ່າງ ເພາະໂຄງຮ່າງເຮັດໃຫ້ຮູບຮ່າງຂອງເຣື້ອງເກີດຂຶ້ນ ຖ້າເຮົາເຫັນມ້າຕົວນຶ່ງຢືນຢູ່ໃນສນາມຫຍ້າ ສ່ວນທີ່ເຮົາມອງເຫັນນັ້ນບໍ່ໄດ້ປາກົດວ່າເປັນໂຄງກະດູກ ແຕ່ເຮົາເຫັນຂົນມ້າແລະໜັງຂອງມັນ ແຕ່ໂຄງກະດູກຊຶ່ງຢູ່ພາຍໃນເຮັດໃຫ້ເຮົາເຫັນຮູບມ້າໄດ້ຢ່າງຊັດແຈ້ງ ຖ້າມີໜັງສັດກອງຢູ່ຕໍ່ໜ້າເຮົາ ເຮົາກໍຄົງບອກບໍ່ໄດ້ວ່າໜັງສັດນັ້ນເປັນໜັງສັດຫຍັງ ເຮົາຕ້ອງເຂົ້າໄປຫຍິບໜັງສັດນັ້ນພິຈາຣະນາໄປມາຢູ່ນານຈຶ່ງຮູ້ຈັກວ່າເປັນໜັງມ້າ ໂຄງຮ່າງຂອງຄຳເທສນາກໍປຽບເໝືອນກັບກະດູກຂອງມ້າທີ່ກ່າວມາແລ້ວນັ້ນ ເປັນສິ່ງທີ່ຊ່ອນຢູ່ພາຍໃນ ແລະເປັນສ່ວນທີ່ຈະໃຫ້ການເທສນາດຳເນີນໄປຢ່າງມີຣະບຽບ ງ່າຍແກ່ຜູ້ເທດໃນການດຳເນີນເຣື່ອງ ແລະງ່າຍແກ່ຜູ້ຟັງຈະຕິດຕາມ ແລະຈັບໃຈຄວາມ

ຫລັກສຳຄັນຂອງໂຄງຮ່າງຄຳເທສນາມີຢູ່ຫລາຍປະການດ້ວຍກັນ ແຕ່ຂໍກ່າວ 4 ປະການທີ່ມີຄວາມສຳຄັນທີ່ສຸດ ທີ່ຜູ້ຈັດໂຄງຮ່າງຄຳເທສນາຕ້ອງຄິດເຖິງ ແລະຈະມອງຂ້າມໄປບໍ່ໄດ້ ຄື

1. ເອກພາບ (Unity) ຄືເນື້ອຫາຂອງຄຳເທສນາເປັນອັນນຶ່ງອັນດຽວກັນຕລອດໄປ ບໍ່ຂາດຕອນ ອັນເປັນເຫດໃຫ້ຜູ້ຟັງສະດຸດ ຖ້າຄຳເທສນານຶ່ງມີຫລາຍເຣື້ອງໂພດ ຈົນຜູ້ຟັງຈັບຄວາມບໍ່ໄດ້ວ່າຜູ້ເທສນາມຸ່ງຈະສອນຫຍັງຫລືຊັກຊວນໃຫ້ເຮັດຫຍັງ ຄຳເທສນາກັນນຶ່ງ ໆ ຕ້ອງມີຫົວໃຈສຳຄັນພຽງເຣື້ອງດຽວ ທຸກສິ່ງທຸກຢ່າງໂຍງຕິດກັບຫົວໃຈດຽວນີ້ ຜູກພັນເປັນໜ່ວຍດຽວກັນ ເມື່ອຄຳເທສນາຈົບຜູ້ຟັງຄວນຈະມີຄຳຕອບເປັນສຽງດຽວວ່າຄຳເທສນາມື້ນີ້ແມ່ນກ່ຽວກັບ.... ນັ້ນສະແດງວ່າຄຳເທສນາໃນມື້ນັ້ນມີເອກພາບ ທີ່ເຮັດໃຫ້ຜູ້ຟັງຈັບໃຈຄວາມໄດ້ ແລະເຊື່ອໝັ້ນວ່າຄຳເທສນາສິດສອນຈະຕິດຕົວຜູ້ຟັງໃນການດຳເນີນຊີວິດປະຈຳວັນ

2. ອັນດັບ (Order) ເອກພາບກ່ຽວກັບເຣື້ອງທັງໝົດ ແຕ່ອັນດັບກ່ຽວກັບສ່ວນຕ່າງ ໆ ຂອງເຣື້ອງ ຄືຜູ້ເທສນາພິຈາຣະນາວ່າ ແຕ່ລະສ່ວນຂອງເຣື້ອງດຽວກັນນັ້ນກ່ຽວໂຍງກັນ ເປັນຣະບຽບຖືກຕ້ອງຕາມລຳດັບຕຳແໜ່ງຂອງມັນຫລືບໍ່ ຕອນໃດຂອງເຣື້ອງມາກ່ອນ ຕອນໃດຂອງເຣື້ອງມາທີ່ຫລັງ ບໍ່ໃຫ້ວົກວົນກັນຈົນຜູ້ຟັງຫລົງ

3. ໄດ້ສ່ວນສັດ (Proportion) ຖ້າຄຳເທສນາກັນນຶ່ງມີຫລາຍສ່ວນຫລາຍຕອນ ຕອນນຶ່ງ ໆ ຈະໃຫ້ຍາວເທົ່າໃດ ຄວນຈະກະເວລາໃຫ້ພໍເໝາະ ຖ້າບາງຕອນບໍ່ສຳຄັນປານໃດ ແຕ່ໄປກ່າວເສັຍຢືດຍາວ ພໍມາເຖິງຕອນສຳຄັນຢາກຈະເວົ້າຍາວ ແຕ່ເວລາບໍ່ພໍເລີຍຕ້ອງຮວບຮັດຕັດຄວາມ ຖ້າເປັນເຊັ່ນນີ້ສະແດງວ່າ ນັກເທສຄົນນັ້ນຕຽມເຣື້ອງບໍ່ໄດ້ສັດສ່ວນ ມີນັກເທດຄົນນຶ່ງກ່າວໄວ້ວ່າ "ຄຳເທສນາທີ່ດີຕ້ອງມີຄວາມສົມດຸລຣະຫວ່າງເນື້ອກັບນ້ຳ ມີເນື້ອຫລາຍແຕ່ນ້ຳນ້ອຍໂພດ ຄົນຟັງອາດຈະກືນບໍ່ລົງ ມີນ້ຳຫລາຍໂພດ ເນື້ອນ້ອຍ ຄົນຟັງຈະບໍ່ອີ່ມຕາມທີ່ຄວນຈະເປັນ" ການມີສ່ວນສັດກໍຄືກັບ ເນື້ອ ກະດູກ ແລະໜັງເປັນສິ່ງຈຳເປັນສຳລັບຮ່າງກາຍຂອງມະນຸດ ເນື້ອຫລາຍໂພດກໍຕຸ້ຍເບິ່ງບໍ່ງາມ ຫລືມີແຕ່ກະດູກ ກໍໝົດຄວາມງາມຄືກັນ ຖ້າກະດູກພົ້ນອອກມານອກໜັງກໍເປັນພຍາດຢ່າງແນ່ນອນ ທຸກຢ່າງຕ້ອງມີສ່ວນສັດຈຶ່ງນັບໄດ້ວ່າຫຸ່ນດີ ຈຶ່ງຈັບໃຈຕ້ອງຕາຂອງຜູ້ເບິ່ງ

4. ຄວາມກ້າວໜ້າ (Progression) ຄໍາເທສນາສົມທຽບກັບການພາຄົນໃຫ້ປີນຂຶ້ນພູ ຕ້ອງປີນສູງຂຶ້ນສເມີ ຫລືຈະສົມທຽບກັບການແລ່ນແຂ່ງກໍໄດ້ ເມື່ອແລ່ນໄປ ແລ່ນໄປກໍເຂົ້າໃກ້ຫລັກຊັຍຂຶ້ນທຸກທີແມ່ນວ່າເສັ້ນທາງທີ່ແລ່ນໄປນັ້ນ ມີທັງທາງລາບລື່ນ ທາງກັນດານ ແຕ່ຢ່າງໃດດີເຣື້ອງຕ້ອງກ້າວໜ້າເລື້ອຍ ໆ ແລະຕໍ່ເນື່ອງໄປຈົນພົບຈຸດຈົບ

5. ການແບ່ງວັກຕອນ (Punctuation) ເປັນສິ່ງທີ່ມີຄວາມສໍາຄັນ ແລະມີຄຸນຄ່າຕໍ່ຜູ້ເທສນາແລະຜູ້ຟັງໃນການຕິດຕາມເນື້ອເຣື້ອງດັ່ງນີ້

ກ. ການແບ່ງວັກຕອນເຮັດໃຫ້ຄວາມຄິດແຈ້ງຂາວອອກ

ຂ. ການແບ່ງວັກຕອນເຮັດໃຫ້ຄວາມຄິດມີຄວາມສັມພັນກົມກຽວກັນ

ຄ. ຊ່ວຍໃຫ້ຜູ້ເທສນາດໍາເນີນເຣື້ອງງ່າຍຂຶ້ນ ເພາະຈື່ຈໍາງ່າຍ

ງ. ຜູ້ຟັງຄໍາເທສນາມີແນວຍຶດຖືໃນການຈື່ຈໍາ

ລາງຄົນອາດມີຄໍາຖາມຕາມມາວ່າ "ຄວນຈະບອກວັກຕອນໃນເວລາເທສນາຫລືບໍ່?" ເຣື້ອງນີ້ຕ້ອງເບິ່ງຄວາມຍາກງ່າຍ ຖ້າເຣື້ອງຍາກກໍຄວນບອກ ເພື່ອໃຫ້ຜູ້ຟັງຈື່ຈໍາໄດ້ ເພາະການແບ່ງວັກຕອນເພື່ອເຮັດໃຫ້ເກີດອັນດັບແລະສົ່ງເສີມຄວາມເຂົ້າໃຈ ຖ້າເປັນເຣື້ອງງ່າຍ ໆ ບໍ່ບອກວັກຕອນກໍດີກວ່າລາງເທື່ອເຣື້ອງຍາວຕັ້ງ 5 ຕອນ ແລະຜູ້ເທສນາບອກວັກຕອນໄປດ້ວຍ ຜູ້ຟັງເລີຍຄອຍວ່າ ເມື່ອໃດຈະຮອດຕອນທີ 5 ຈັກເທື່ອ ເຮັດໃຫ້ເສັຍຄວາມສົນໃຈໄປ ຖ້າຈໍາຕ້ອງແບ່ງເປັນຕອນ ຢ່າບອກບາງເທື່ອຈະດີກວ່າ ແຕ່ຢ່າມີຫລາຍຕອນເກີນໄປ ໃຫ້ເກີດຄວາມສັບສົນ

**ຂ. ຄໍານໍາ Introduction**

ເຫດທີ່ມີຄໍານໍາ ເພື່ອນໍາພາຜູ້ຟັງໃຫ້ເຂົ້າໃຈວ່າ ຜູ້ເວົ້າກໍາລັງຈະເວົ້າເຣື້ອງຫຍັງ ແລະຄໍານໍາສາມາດຕຽມໃຈຄົນຟັງ ເພື່ອຈະໃຫ້ເຂົາເຂົ້າໃຈເຣື້ອງທີ່ຈະກ່າວຕໍ່ໄປ ລາງເທື່ອເຫດການກ່ອນທີ່ຈະເທສນາ ມີບັນຍາກາດທີ່ບໍ່ສນັບສນຸນໃຫ້ຜູ້ຟັງມີຈິດໃຈພ້ອມທີ່ຈະຮັບຟັງຄໍາເທສນາ ດັ່ງນັ້ນຄໍານໍາຈຶ່ງມີສ່ວນຊ່ວຍໃນການນໍາພາຄວາມຄິດຂອງກອງປະຊຸມທີ່ກະຈັດກະຈາຍ ມາສູ່ຫົວຂໍ້ເຣື້ອງທີ່ຜູ້ເທສນາຕ້ອງການຈະເທສນາ ຄໍານໍາທຽບກັບຄໍາເຊີນຊວນ ຮຽກຮ້ອງໃຫ້ຜູ້ຟັງເລີ້ມເດີນທາງໄປດ້ວຍກັນກັບຜູ້ເວົ້າ ແລະປີນປ່າຍກ້າວໜ້າໄປໃນທາງດຽວກັນ

*ຖ້າມີຄໍານໍາທີ່ດີບໍ່ໄດ້ ຢ່າມີຄໍານໍາເລີຍກໍດີກວ່າ*

### ລັກສະນະຂອງຄໍານໍາ

1. ຄໍານໍາຄວນເປັນຄໍາທີ່ສເນີຄວາມຄິດເຫັນໃກ້ຄຽງ ຫລືສັມພັນກັບຂໍ້ເຣື້ອງທີ່ຈະເທສນາ ເພື່ອນໍາໃຫ້ຄໍາເທສນາດໍາເນີນໄປຕາມທັມມະຊາດແລະງ່າຍ ແຕ່ຕ້ອງຣະວັງວ່າ ຄວາມໃນຄໍານໍາບໍ່ຊໍ້າກັບຄວາມໃນເນື້ອເຣື້ອງ ເພາະຄໍານໍາບໍ່ແມ່ນເນື້ອເຣື້ອງສ່ວນນຶ່ງ ສິ່ງທີ່ສໍາຄັນ ຄໍານໍາຕ້ອງບໍ່ມຸ່ງທີ່ຈະສເນີເຣື້ອງໃຫ້ແຕກຕ່າງໄປຈາກເນື້ອເຣື້ອງທີ່ນໍາພາ ແຕ່ໃນເວລາດຽວກັນຄໍານໍານັ້ນເປັນສ່ວນທີ່ນໍາເນື້ອເຣື້ອງຢ່າລືມວ່າ ຄໍານໍາທໍາໜ້າທີ່ນໍາ

2. ຄໍານໍາຄວນມີພຽງໃຈຄວາມດຽວ (ເນື້ອຫາດຽວ) ຖ້າເປັນເຣື້ອງກໍຄວນເປັນເຣື້ອງດຽວຢ່າໃຫ້ຄໍານໍາແບບຕາຍຕົວ ຈະເຮັດໃຫ້ຄົນຟັງຈັບໃຈຄວາມໄດ້ ເຊັ່ນລາງຄົນຂຶ້ນໄປເທສນາເມື່ອໃດກໍຈະກ່າວວ່າ "ມື້ນີ້ຂ້າພະເຈົ້າຈະເວົ້າເຣື້ອງ..."

3. ຄຳນຳຄວນຈະສັ້ນໄດ້ໃຈຄວາມ ແຕ່ໄດ້ຄວາມໝາຍຊັດແຈ້ງ ເພາະຄຳນຳທີ່ດີພຽງສອງສາມຄຳກໍຈະປູກໃຈຂອງຜູ້ຟັງ ແລະຮຽກຮ້ອງຄວາມສົນໃຈໄດ້

4. ຄຳນຳຕ້ອງໄດ້ຮັບການຕຽມຢ່າງລອບຄອບ ລາງຄົນແຕ່ງຄຳເທສນາແລ້ວຈຶ່ງໄປນັ່ງໃຊ້ເວລາອີກຫລາຍຊົ່ວໂມງ ເພື່ອຄິດຫາຄຳນຳພຽງປະໂຫຍກຫລືສອງປະໂຫຍກເທົ່ານັ້ນ ຫາກບໍ່ຄິດໃຫ້ລອບຄອບຈະເຮັດໃຫ້ຄຳເທສນາທັງຫມົດເສັຍໄດ້ 5 ນາທີທຳອິດຂອງຄຳເທສນາເປັນນາທີທອງ ຈະຕ້ອງພະຍາຍາມຜູກມັດຄວາມສົນໃຈຂອງຜູ້ຟັງໃຫ້ໄດ້

## ຄ. ຕົວເຣື້ອງຫລືເນື້ອເຣື້ອງ Body

ຄຳຖາມທີ່ວ່າ "ຈະເທສນາເຣື້ອງຫຍັງ?" ເປັນສິ່ງທີ່ເກີດຂຶ້ນໃນໃຈຂອງນັກເທສນາ ນັກເທດຈະຊອກຫາຄຳຕອບນີ້ໄດ້ດ້ວຍການອ້ອນວອນແລະພາວະນາທັມກັບພຣະເຈົ້າ ນັກເທດຄວນທີ່ຈະຊອກຫານ້ຳພຣະທັຍແລະພຣະປະສົງຈາກພຣະເຈົ້າກ່ອນສິ່ງອື່ນວ່າ ພຣະອົງຕ້ອງການໃຫ້ເທສນາຫຍັງ? ໂດຍຄວາມເຊື່ອໃນການນຳພາຂອງພຣະເຈົ້າ ເຂົາຕ້ອງໃຊ້ເວລາຄົ້ນຄວ້າຈາກພຣະຄຣິສທັມຄັມພີ ອ່ານແລະສຶກສາຄົ້ນຄວ້າຈາກປື້ມຫນັງສືຕ່າງ ໆ ໃນທີ່ສຸດເຂົາຈະໄດ້ເຣື້ອງນຶ່ງ ຈະດີຫລືບໍ່ດີ ຖືກໃຈຫລືບໍ່ ໃນຕອນນີ້ເຂົາເອງຍັງຕອບບໍ່ຖືກ ແຕ່ເມື່ອຕັດສິນໃຈວ່າຈະເອົາເຣື້ອງນັ້ນ ຕ້ອງຄິດຕໍ່ໄປອີກວ່າ ຈະໃຫ້ຊື່ "ຫົວເຣື້ອງ"ວ່າແນວໃດຈຶ່ງຈະເຫມາະສົມ ບາງເທື່ອເຂົາຕ້ອງໃຊ້ເວລາຫລາຍວັນໃນການພິຈາຣະນາ ເມື່ອຫົວເຣື້ອງໄດ້ແລ້ວກໍຈັດວາງ "ໂຄງຮ່າງຂອງເຣື້ອງ"

### ງ. ຄຳສົ່ງທ້າຍ

ຖ້າຈະປຽບຄຳນຳກັບຄຳສົ່ງທ້າຍວ່າອັນໃດຈະສຳຄັນກວ່າກັນ ຄຳສົ່ງທ້າຍຄວນຈະສຳຄັນກວ່າຄຳນຳ ຄຳສົ່ງທ້າຍຄືກັບ ແມ່ນ້ຳທີ່ໄຫລລົງສູ່ທະເລ ເປັນກະແສນ້ຳທີ່ໄຫລໂດຍບໍ່ຕິດຂັດ ຢ່າໃຫ້ຄືກັບເຫນົ້າອອກຈະຈອກ ເມື່ອມາເຖິງສຸດທ້າຍແລ້ວກໍໄຫລທີ່ລະຫຍົດ ຄຳສົ່ງທ້າຍຈະຕ້ອງລວມຄວາມຄິດທັງຫມົດໃຫ້ຜູ້ຟັງສາມາດນຳກັບໄປບ້ານໄດ້ ບໍ່ແມ່ນເຣື້ອງໃຫມ່ ເພາະການດຳເນີນເຣື້ອງໄດ້ນຳພາມາເຖິງຈຸດສຸດຍອດແລ້ວ ແລະໄດ້ຊັກຈູງໃຈໃຫ້ຜູ້ຟັງປະທັບໃຈແລ້ວ ບັດນີ້ເປັນການສົ່ງທ້າຍເພື່ອໃຫ້ຜູ້ຟັງອອກໄປຍັງໂລກກວ້າງເພື່ອຂັບຕາມຄວາມຈິງແຫ່ງຊີວິດທີ່ເຂົາໄດ້ຮັບມາ ດັ່ງນັ້ນຄຳສົ່ງທ້າຍຄວນເປັນຄຳຫນຸນໃຈ

# ສອງ. ແບບລັກສະນະຂອງຄຳເທສນາ Classifications of Sermons

ແບບລັກສະນະຂອງຄຳເທສນາມີຫລາຍແບບ ແຕ່ແບບທີ່ເປັນມາດຕາຖານໃຫຍ່ ໆ ທີ່ນິຍົມໃຊ້ກັນຢູ່ນັ້ນ ມີສາມແບບດ້ວຍກັນ ດັ່ງນີ້

## 1. ຄຳເທສນາແບບຫົວເຣື້ອງ (Topical Sermons)

**ຄຳເທສນາແບບນີ້ເປັນທີ່ນິຍົມຢ່າງກວ້າງຂວາງໃນຫມູ່ນັກເທດທົ່ວໂລກ ດ້ວຍເຫດຜົນດັ່ງນີ້**

1. ສາມາດເລືອກເຣື້ອງເທສນາໄດ້ທັນສະໄຫມຢູ່ຕລອດເວລາ
2. ຜູ້ເທສນາບໍ່ຈຳເປັນຕ້ອງມີຄວາມຮູ້ຢ່າງເລິກຊຶ້ງໃນພຣະຄຣິສທັມຄັມພີ
3. ຜູ້ເທສນາມີອິສຣະເຕັມທີ່ໃນການສະແດງຄວາມຄິດເຫັນ

**ຈຸດອ່ອນຂອງຄຳເທສນາແບບນີ້**

1. ຄຳເທສນາແບບນີ້ເປັນການສອນພຣະຄັມພີໃນຣະດັບທີ່ອ່ອນ
2. ຜູ້ເທສນາອາດຈະເທສນາອອກນອກເຣື້ອງພຣະຄັມພີໄປຢ່າງໃຫຍ່
3. ຜູ້ຟັງຄຳເທສນາທີ່ມັກຟັງຄຳເທສນາແບບນີ້ ຈະຟັງຄຳເທສນາແບບນີ້ແບບດຽວ ຈະເຮັດໃຫ້ຂາດຄວາມຮູ້ຄວາມເຂົ້າໃຈພຣະຄຣິສທັມຄັມພີເລິກຊຶ້ງ

## 2. ຄຳເທສນາແບບຫົວຂໍ້ພຣະທັມ (Textual Sermons)

ຄຳເທສນາແບບນີ້ເປັນການເທສນາທີ່ຄ່ອນຂ້າງຈະລະອຽດກວ່າຄຳເທສນາແບບຫົວເຣື່ອງ ເພາະການເທສນາແບບຫົວຂໍ້ພຣະທັມມີຂໍ້ບັງຄັບທີ່ແນ່ນອນ ແລະໃຫ້ເສຣີພາບແກ່ຜູ້ເທສນານ້ອຍກວ່າແບບຫົວຂໍ້ເຣື້ອງ ຄຳເທສນາແບບຫົວຂໍ້ພຣະທັມເລີ້ມຈາກການຫາຂໍ້ພຣະທັມຕອນນຶ່ງ ເພື່ອຕັ້ງເປັນຊື່ເຣື້ອງ ແລ້ວໂຄງຮ່າງຫລັກຂອງຄຳເທສນາທັງຫມົດຈະຕ້ອງສ້າງຂຶ້ນມາຈາກຂໍ້ພຣະທັມຕອນນັ້ນເທົ່ານັ້ນ ແຕ່ລາຍລະອຽດຂໍ້ຍ່ອມຈະໄດ້ມາຈາກພຣະທັມຕອນອື່ນ ໆ ເພື່ອສນັບສນຸນໂຄງຮ່າງໃຫຍ່ຂອງຄຳເທສນາກໍໄດ້

## 3. ຄຳເທສນາແບບອະທິບາຍທັມ (Expository Sermons)

ຄຳເທສນາແບບນີ້ ເປັນຄຳເທສນາແບບທີ່ຕ້ອງມີການຕຽມການຫລາຍທີ່ສຸດ ຜູ້ເທສນາຕ້ອງມີການສຶກສາຄົ້ນຄວ້າ ກວດສອບຄວາມຫມາຍທັງຮາກສັບໃນພາສາເດີມ ຕ້ອງສຶກສາປວັດສາດ ແລະວັທນະທັມປະເພນີ ທີ່ກ່ຽວຂ້ອງກັບເຣື່ອງທີ່ຈະເທສນາ ຊອກຫາຕົວຢ່າງທີ່ເຫມາະສົມ ການດັດແປງໃຫ້ເຂົ້າກັບຊີວິດໃນປັດຈຸບັນ ແມ່ນວ່າຄຳເທສນາແບບອະທິບາຍທັມຈະຍຸ່ງຍາກລຳບາກຫລາຍພຽງໃດກໍຕາມ ແຕ່ການເທສນາແບບນີ້ເປັນແບບທີ່ໃຊ້ໄດ້ຜົນດີທີ່ສຸດ ເປັນຄຳເທສນາທີ່ເລິກຊຶ້ງ ແລະສ້າງສັນຊີວິດຝ່າຍຈິດວິນຍານ ຂອງເຫລົ່າຜູ້ເຊື່ອໄດ້ດີທີ່ສຸດ ເພາະມີການອະທິບາຍ ແລະຕີຄວາມຫມາຍພຣະຄຣິສທັມຄັມພີທີ່ເລິກຊຶ້ງກວ່າຄຳເທສນາແບບອື່ນ ໆ

ຄວາມແຕກຕ່າງຣະຫວ່າງຄຳເທສນາແບບຫົວຂໍ້ພຣະທັມ ແລະແບບອະທິບາຍທັມ ທີ່ເຫັນໄດ້ຊັດແຈ້ງດັ່ງນີ້ຄື ຄຳເທສນາແບບອະທິບາຍທັມມັກຈະໃຊ້ຂໍ້ພຣະທັມເທື່ອລະຫລາຍ ໆ ຂໍ້ທີ່ຕໍ່ເນື່ອງກັນເປັນຕອນ ໆ ເພື່ອສ້າງໂຄງຮ່າງຂອງຄຳເທສນາທີ່ມີເປົ້າຫມາຍດຽວກັນ ແຕ່ຄຳເທສນາແບບຫົວຂໍ້ພຣະທັມໃຊ້ຂໍ້ພຣະຄັມພີພຽງຂໍ້ດຽວເປັນໂຄງຮ່າງ ແລ້ວໃຊ້ຂໍ້ພຣະທັມອື່ນສນັບສນຸນນຳຫລັງ